ສຽງຂອງສະພາແຫ່ງຊາດ

# ຜູ້ແທນປະຊາຊົນ
PHOUTHEN PASAXON

ສຳນັກງານຕັ້ງຢູ່ອາຄານຄະນະເລຂາທິການສະພາແຫ່ງຊາດ, ໂທ: 021 840 430 email: phouthen.na@gmail.com; www.na.gov.la; app: Lao na

01-08 ມີນາ 2026
ປີທີ 15
ສະບັບທີ 1056
ລາຍສັປດາ

## ສຳເລັດກອງປະຊຸມຄົບຄະນະ ຄັ້ງທີ 2 ຂອງ ຄະນະບໍລິຫານງານສູນກາງພັກ ສະໄໝທີ XII



(ສພຊ) - ກອງປະຊຸມຄົບຄະນະ ຄັ້ງທີ 2 ຂອງຄະນະບໍລິຫານງານສູນກາງພັກ ສະໄໝທີ XII ໄດ້ປິດລົງດ້ວຍຜົນສຳເລັດອັນຈົບງາມ ໃນວັນທີ 5 ມີນາພາຍຫຼັງດຳເນີນມາແຕ່ວັນທີ 3 ມີນາ 2026; ຄະນະບໍລິຫານງານສູນກາງພັກ ໄດ້ພ້ອມກັນຄົ້ນຄ້ວາ, ປຶກສາຫາລືດ້ວຍຄວາມຮັບຜິດຊອບສູງ, ເສີມຂະຫຍາຍປະຊາທິປະໄຕ-ທ້ວງຄິດປະດິດສ້າງ ແລະ ໄດ້ມີຄວາມເປັນເອກະພາບຮັບຮອງເອົາເອກະສານສຳຄັນ ແລະ ໄດ້ໃຫ້ທິດຊີ້ນຳຈຳນວນໜຶ່ງ ເປັນຕົ້ນ:

- ຮັບຮອງແຜນດຳເນີນງານຂອງຄະນະບໍລິຫານງານສູນກາງພັກ ສະໄໝທີ XII ເຊິ່ງຈະກາຍເປັນໂຄງການເຮັດວຽກຕະຫຼອດສະໄໝຂອງຄະນະບໍລິຫານງານສູນກາງພັກ ໃນ 5 ປີຕໍ່ໜ້າ, ທັງເປັນບ່ອນອີງໃນການສ້າງ

ອ່ານຕໍ່ໜ້າ 2

## ເຜີຍແຜ່, ເຊື່ອມຊຶມ ເອກະສານກອງປະຊຸມໃຫຍ່ຂອງພັກ

(ສພຊ) - ກອງປະຊຸມເຜີຍແຜ່, ເຊື່ອມຊຶມ ເອກະສານກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດ ຄັ້ງທີ XII ຂອງພັກ ໄດ້ຈັດຂຶ້ນໃນວັນທີ 25 ກຸມພານີ້ ທີ່ຫໍປະຊຸມແຫ່ງຊາດ ແລະ ຜ່ານວິດີໂອທາງໄກສຳລັບທ້ອງຖິ່ນໃນຂອບເຂດທົ່ວປະເທດ, ໂດຍການເຂົ້າຮ່ວມຂອງສະຫາຍທອງລຸນ ສີສຸລິດ ເລຂາທິການໃຫຍ່ຄະນະບໍລິຫານງານສູນກາງພັກ, ປະທານປະເທດ, ບັນດາສະຫາຍກຳມະການກົມການເມືອງສູນກາງພັກ, ຄະນະເລຂາທິການສູນກາງພັກ, ກຳມະການສູນກາງພັກ, ກຳມະການສຳຮອງສູນກາງພັກ, ເລຂາຄະນະບໍລິຫານງານພັກກະຊວງ-ອົງການ, ນະຄອນຫຼວງວຽງຈັນ ແລະ ແຂວງໃນຂອບເຂດທົ່ວປະເທດ ພ້ອມດ້ວຍພະນັກງານຫຼັກແຫຼ່ງ ຂັ້ນ

ອ່ານຕໍ່ໜ້າ 3





ແນວຄິດປະທານ
ໄກສອນ ພົມວິຫານ
ຜູ້ນຳທີ່ປະຊາຊົນເຄົາລົບຮັກ

ປະຊາຊົນເລືອກເອົາຜູ້ແທນຂຶ້ນມາ ກໍເພື່ອຕາງໜ້າເຂົາເຈົ້າຮ່ວມໃນການຄຸ້ມຄອງລັດ ແຕ່ຫາກບໍ່ແມ່ນເພື່ອຍຶດສັກຕຳແໜ່ງ ແລະ ອຳນາດຂອງຜູ້ແທນແຕ່ປະການໃດ.

(ນິພົນເລືອກເຟັ້ນ ເຫຼັ້ມ 4, ໜ້າ 206)

ຜູ້ແທນ ແມ່ນຂົວຕໍ່ລະຫວ່າງມວນຊົນຜູ້ເລືອກຕັ້ງ ກັບ ອຳນາດການປົກຄອງຂັ້ນຕ່າງໆ. ດັ່ງນັ້ນ, ຕ້ອງສ້າງສາຍພົວພັນອັນສະໜິດແໜ້ນລະຫວ່າງ ຜູ້ເລືອກຕັ້ງ ກັບ ອົງການທີ່ປະຊາຊົນເລືອກຕັ້ງຂຶ້ນ ໂດຍຜ່ານການເຄື່ອນໄຫວ ແລະ ການພົວພັນໃກ້ຊິດ ລະຫວ່າງຜູ້ແທນ ກັບ ຜູ້ເລືອກຕັ້ງ.

(ນິພົນເລືອກເຟັ້ນ ເຫຼັ້ມ 4, ໜ້າ 206)

ຜູ້ແທນ ກໍຕ້ອງແກ້ໄຂຂໍ້ຂ້ອງໃຈຕ່າງໆ ຂອງປະຊາຊົນດ້ວຍຕົນເອງ ຫຼື ແຈ້ງຂ່າວໃຫ້ປະຊາຊົນຮູ້ ແລະ ຕື່ນຕົວປະຕິບັດແຜນນະໂຍບາຍ, ນະໂຍບາຍໃໝ່ຕ່າງໆຂອງພັກ ແລະ ລັດ.

(ນິພົນເລືອກເຟັ້ນ ເຫຼັ້ມ 4, ໜ້າ 207)

ອ່ານຕໍ່ສະບັບໜ້າ

## ກອງປະຊຸມຄະນະປະຈຳສະພາແຫ່ງຊາດ ສະໄໝວິສາມັນເດືອນກຸມພາ



(ສພຊ) - ກອງປະຊຸມຄະນະປະຈຳສະພາແຫ່ງຊາດສະໄໝວິສາມັນເດືອນກຸມພາ2026 ໄດ້ດຳເນີນຂຶ້ນໃນວັນທີ27ກຸມພານີ້ໂດຍການເປັນປະທານຂອງທ່ານ ປອ. ໄຊສົມພອນ ພົມວິຫານ ກຳມະການກົມການເມືອງສູນກາງພັກ, ປະທານຄະນະປະຈຳສະພາແຫ່ງຊາດ; ມີບັນດາ

ອ່ານຕໍ່ໜ້າ 5




## ຜົນກອງປະຊຸມສະໄໝສາມັນຂອງ ລັດຖະບານ ເດືອນມັງກອນ-ກຸມພາ

(ສພຊ) - ຕອນແລງວັນທີ 25 ກຸມພານີ້ ທີ່ສຳນັກງານນາຍົກລັດຖະມົນຕີ (ສນຍ), ທ່ານ ສອນໄຊ ສີດພະໄຊ ລັດຖະມົນຕີປະຈຳສຳນັກງານນາຍົກລັດຖະມົນຕີ, ໂຄສົກລັດຖະບານ ໄດ້ຖະແຫຼງຂ່າວຕໍ່ສື່ມວນຊົນ ກ່ຽວກັບຜົນກອງປະຊຸມສະໄໝ

ອ່ານຕໍ່ໜ້າ 8



## ປະກາດລາຍຊື່ຜູ້ໄດ້ຮັບເລືອກຕັ້ງເປັນ ສະມາຊິກສະພາແຫ່ງຊາດ ຊຸດທີ X



(ສພຊ) - ຕອນບ່າຍວັນຈັນທີ 2 ມີນານີ້, ທ່ານ ປອ. ນາງ ສູນທອນ ໄຊຍະຈັກ ຮອງປະທານສະພາແຫ່ງຊາດ, ຜູ້ປະຈຳການຄະນະປະຈຳການຄະນະກຳມະການເລືອກຕັ້ງລະດັບຊາດ, ຮອງຫົວໜ້າອະນຸກຳມະການໂຄງປະກອບ ແລະ ບຸກຄະລາກອນ ໄດ້ຖະແຫຼງຂ່າວຕໍ່ສື່ມວນຊົນກ່ຽວກັບປະກາດແຈ້ງການຂອງຄະນະກຳມະການເລືອກຕັ້ງລະດັບຊາດ ກ່ຽວກັບລາຍຊື່ຜູ້ໄດ້ຮັບເລືອກຕັ້ງເປັນສະມາຊິກສະພາແຫ່ງຊາດ ຊຸດທີ X ຢູ່ເຂດເລືອກຕັ້ງຕ່າງໆໃນຂອບເຂດທົ່ວປະເທດ ເຊິ່ງມີລາຍລະອຽດຕາມປະກາດແຈ້ງການສະບັບເລກທີ 91/ຄລຊ, ລົງວັນທີ02/3/2026.

ອ່ານຕໍ່ໜ້າ 4

ການປະກາດ ລາຍຊື່ (ໜ້າ 8)



ປິດກອງປະຊຸມ... (ໜ້າ 10)

ບໍ່ໂລກໃຫ້ທັນ... (ໜ້າ 12)

ຊົມເຊີຍວັນແມ່ຍິງສາກົນ ຄົບຮອບ 116 ປີ (8 ມີນາ 1910 - 8 ມີນາ 2026) ຢ່າງສຸດໃຈ!




## ສຳເລັດ...

(ຕໍ່ຈາກໜ້າ 1)

ແຜນປະຕິບັດງານ, ແຜນວຽກຈຸດສຸມ ຂອງແຕ່ລະຂະແໜງການທັງສູນກາງແລະທ້ອງຖິ່ນ.

-ຮັບຮອງເອົາແບບແຜນວິທີເຮັດວຽກ ຂອງຄະນະບໍລິຫານງານສູນກາງພັກໂດຍມອບໃຫ້ບັນດາສະຫາຍໃນຄະນະບໍລິຫານງານສູນກາງພັກຮີບຮ້ອນປັບປຸງ, ແກ້ໄຂ ແບບແຜນເຮັດວຽກ ແລະ ວິທີນຳພາຂອງຕົນໃຫ້ມີຄວາມສອດຄ່ອງກວ່າເກົ່າ; ການເຮັດວຽກຕ້ອງມີແຜນການ, ມີຈຸດປະສົງ, ລະດັບຄາດໝາຍຈະແຈ້ງ; ມີການແບ່ງວຽກ, ແບ່ງຄວາມຮັບຜິດຊອບໃຫ້ໝູ່ຄະນະຢ່າງລະອຽດ, ຈະແຈ້ງ; ຮູ້ນຳໃຊ້ກົງຈັກ ແລະ ພະນັກງານ ໃຫ້ມີປະສິດທິຜົນ; ເຄົາລົບ ແລະ ປະຕິບັດຫຼັກການລວມສູນປະຊາທິປະໄຕໃຫ້ເຂັ້ມງວດ, ເສີມຂະຫຍາຍສະຕິປັນຍາ ແລະ ກຳລັງແຮງຂອງໝູ່ຄະນະ; ຫຼີກເວັ້ນສະພາບທີ່ມີແຕ່ເລຂາຄະນະພັກ ໃຊ້ສິດ, ໃຊ້ອຳນາດແບບອາຍາສິດໃນການຕົກລົງບັນຫາ.

- ໃຫ້ທິດຊີ້ນຳຕໍ່ແຜນຜັນຂະຫຍາຍແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ຄັ້ງທີ X ເພື່ອໃຫ້ລັດຖະບານນຳໄປຜ່ານກອງປະຊຸມສະພາແຫ່ງຊາດຮັບຮອງ ແລະ ເຂົ້າສູ່ການຈັດຕັ້ງປະຕິບັດໃຫ້ມີປະສິດທິຜົນ.

- ກຳນົດໃຫ້ແຈ້ງຕື່ມກ່ຽວກັບພາລະບົດບາດ, ສິດໜ້າທີ່ ແລະ ສາຍພົວພັນ ລະຫວ່າງເລຂາພັກແຂວງ-ນະຄອນຫຼວງກັບ ປະທານຄະນະກຳມະການປົກຄອງແຂວງ-ນະຄອນຫຼວງ, ລະຫວ່າງເລຂາພັກເມືອງ-ນະຄອນ ກັບ ປະທານຄະນະກຳມະການປົກຄອງເມືອງ-ນະຄອນຕ້ອງຮັບປະກັນລັກສະນະເສີມຂະຫຍາຍປະຊາທິປະໄຕ, ບໍ່ກ້າວກ່າຍສິດ, ໜ້າທີ່ຂອງກັນແລະກັນ; ເລຂາພັກແຂວງ-ນະຄອນຫຼວງ ໃນນາມເປັນປະທານສະພາປະຊາຊົນແຂວງ-ນະຄອນຫຼວງ ມີໜ້າທີ່ຕິດຕາມ, ກວດກາການຈັດຕັ້ງປະຕິບັດໜ້າທີ່ວຽກງານຂອງອົງການບໍລິຫານທ້ອງຖິ່ນໃຫ້ມີຄວາມເຂັ້ມງວດ, ເດັດຂາດ ແລະ ໂປ່ງໃສ.

- ໃຫ້ແຕ່ລະທ້ອງຖິ່ນຮີບຮ້ອນໃນການສ້າງຕັ້ງຕາແສງໃຫ້ສຳເລັດຕາມແຜນທີ່ກຳນົດໄວ້ຢ່າງຊ້າໃຫ້ສຳເລັດໃນກາງປີ 2027 ໃຫ້ສາມາດເຄື່ອນໄຫວຈັດຕັ້ງປະຕິບັດທົ່ວປະເທດ, ຮັບປະກັນການຈັດຕັ້ງປະຕິບັດວຽກງານ ກໍຄືເປັນເຈົ້າການໃນການຜັນຂະຫຍາຍແນວທາງ, ນະໂຍບາຍຂອງພັກ-ລັດ ໂດຍສະເພາະແມ່ນການຜັນຂະຫຍາຍມະຕິກອງປະຊຸມໃຫຍ່ ຄັ້ງທີ XII ຂອງພັກ ໃຫ້ເຂົ້າເຖິງຮາກຖານຢ່າງທົ່ວເຖິງ.

- ສືບຕໍ່ປັບປຸງການຈັດຕັ້ງບ້ານ, ມີການແບ່ງຄວາມຮັບຜິດຊອບລະຫວ່າງຕາແສງ ແລະ ບ້ານຢ່າງຈະແຈ້ງ, ເຮັດໃຫ້ບ້ານກາຍເປັນອົງການຈັດຕັ້ງຊຸມຊົນທີ່ເຂັ້ມແຂງຮອບດ້ານ, ນຳພາການພັດທະນາຢູ່ຂັ້ນບ້ານ.

-ເສີມຂະຫຍາຍບົດບາດຂອງສະພາທິດສະດີສູນກາງພັກ, ສະຖາບັນການເມືອງ ແລະ ການປົກຄອງແຫ່ງຊາດ, ບັນດາສະຖາບັນຄົ້ນຄວ້າ, ມະຫາວິທະຍາໄລແຫ່ງຊາດ... ເຂົ້າໃນການຄົ້ນຄວ້າບັນຫາຍຸດທະສາດ, ວາງ ແລະ ບູລະນະແນວທາງ, ນະໂຍບາຍ ຊ່ວຍສູນກາງພັກ.

-ເພີ່ມທະວີການຕິດຕາມ, ກວດກາ, ສະຫຼຸບຕີລາຄາ ແລະ ຖອດຖອນບົດຮຽນຢ່າງເປັນປະຈຳ. ບັນດາສະຫາຍກຳມະການສູນກາງພັກ, ເລຂາພັກແຂວງ-ນະຄອນຫຼວງຕ້ອງມີຄວາມເປັນເຈົ້າໃນການຕິດຕາມ, ກວດກາການພັດທະນາຢູ່ທ້ອງຖິ່ນ ໃຫ້ເປັນລະບົບ, ສົມທົບກັບຂະແໜງການກ່ຽວຂ້ອງ ປະຕິບັດມະຕິ, ຄຳສັ່ງ, ກົດໝາຍ ແລະ ລະບຽບການ ຢ່າງເຂັ້ມງວດ ຕິດພັນກັບການແກ້ໄຂຂັ້ນຂອດ, ສິ່ງກີດໜ່ວງຖ່ວງດຶງການຜະລິດ-ທຸລະກິດ, ການຈັບຈອງ-ເຊົ່າ-ສຳປະທານທີ່ດິນ, ຊັບພະຍາກອນທຳມະຊາດ ແລະ ປາກົດການຫຍໍ້ທໍ້ຕ່າງໆທີ່ເກີດຂຶ້ນ; ພ້ອມນັ້ນ, ກໍກວດກາຄວາມຮັບຜິດຊອບຂອງພະນັກງານທີ່ຢູ່ໃນການຄຸ້ມຄອງ ບໍ່ໃຫ້ເຮັດຜິດລະບຽບວິໄນ ແລະ ກົດໝາຍ, ຊອກໃຫ້ເຫັນ, ສົ່ງເສີມຄົນດີ, ຄົນເກັ່ງ ແລະ ເຮັດແທ້ທຳຈິງ.

ອີງຕາມຄວາມຮຽກຮ້ອງຕ້ອງການຂອງໜ້າທີ່ການເມືອງໃນໄລຍະໃໝ່, ກອງປະຊຸມໄດ້ມີການປັບປຸງ, ສັບຊ້ອນ, ແບ່ງງານ, ມອບໝາຍໜ້າທີ່ ໃຫ້ບັນດາສະຫາຍກົມການເມືອງ, ຄະນະເລຂາທິການສູນກາງພັກ, ກຳມະການສູນກາງພັກ ໄປຮັບຜິດຊອບວຽກງານຢູ່ຂະແໜງການ ແລະ ທ້ອງຖິ່ນຕ່າງໆ ເພື່ອຊີ້ນຳການປະຕິບັດໜ້າທີ່ຂອງພັກ ແລະ ລັດ ໃຫ້ບັນລຸຜົນເປັນຈິງ.

ໃນໂອກາດດັ່ງກ່າວ, ສະຫາຍ ທອງລຸນ ສີສຸລິດ ເລຂາທິການໃຫຍ່ຄະນະບໍລິຫານງານສູນກາງພັກ ໄດ້ເນັ້ນຕື່ມບາງບັນຫາເພື່ອໃຫ້ບັນດາສະຫາຍຄະນະບໍລິຫານງານສູນກາງພັກນຳໄປຈັດຕັ້ງຜັນຂະຫາຍ ແລະ ສຸມໃສ່ຈັດຕັ້ງປະຕິບັດ ໃຫ້ມີປະສິດທິພາບສູງ ດັ່ງນີ້:

**ໜຶ່ງ:** ສືບຕໍ່ຊີ້ນຳການຈັດຕັ້ງຜັນຂະຫຍາຍມະຕິກອງປະຊຸມໃຫຍ່ຄັ້ງທີ XII ຂອງພັກ "ໃຫ້ໄວ, ໃຫ້ມີຈຸດສຸມ, ໃຫ້ຖືກທິດ, ໃຫ້ເປັນຮູບປະທຳ".

**ສອງ:** ຊີ້ນຳການກະກຽມ ແລະ ດຳເນີນກອງປະຊຸມຄັ້ງປະຖົມມະລຶກຂອງສະພາແຫ່ງຊາດ ຊຸດທີ X ແລະ ສະພາປະຊາຊົນຂັ້ນແຂວງ ຊຸດທີ V ໃຫ້ຮອບດ້ານ, ຮອບຄອບ ແລະ ຮັດກຸມ.

**ສາມ:** ຊີ້ນຳການກະກຽມກອງປະຊຸມຄັ້ງປະຖົມມະລຶກຂອງຄະນະລັດຖະບານ ຊຸດທີ X. ມອບໃຫ້ລັດຖະບານຊຸດໃໝ່ ສືບຕໍ່ຄົ້ນຄວ້າ ປັບປຸງກົງຈັກຂອງລັດຖະບານ ຕາມທິດກະທັດຮັດ, ສົມເຫດສົມຜົນ ແລະມີປະສິດທິພາບ, ສອດຄ່ອງກັບທິດ "ສູນກາງເຮັດໜ້າທີ່ມະຫາພາກ, ເພີ່ມຄວາມຮັບຜິດຊອບ ແລະ ຄວາມເປັນເຈົ້າ ໃຫ້ທ້ອງຖິ່ນຫຼາຍຂຶ້ນ"; "ກົມການເມືອງຢາກໃຫ້ເປັນທີມງານໜັ້ກແໜ້ນ ເປັນເອກະພາບສູງ, ບຶນໃສ່, ຈັບມືກັນແກ້ໄຂບັນຫາທີ່ເຮົາຍັງຄົງຄ້າງຢູ່ ໃນສະໄໝທີ XI, ໃຫ້ສືບຕໍ່ແກ້ໄຂບັນດາສິ່ງທີ່ຍັງຄົງຄ້າງນັ້ນ ແລະ ໃຫ້ບຸກທະລຸໃໝ່ ຕາມທິດທີ່ພວກເຮົາເວົ້າກັນນີ້".

**ສີ່:** ຊີ້ນຳການກະກຽມ ແລະ ດຳເນີນກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດ ຄັ້ງທີ XII ຂອງແນວລາວສ້າງຊາດ ໃຫ້ໄດ້ຮັບຜົນສຳເລັດເປັນຢ່າງດີ, ຍູ້ແຮງການສືບຕໍ່ຜັນຂະຫຍາຍແນວທາງປ່ຽນແປງໃໝ່ໃນຂົງເຂດວຽກງານແນວໂຮມສູ່ລວງເລິກໃນເງື່ອນໄຂໃໝ່.

**ຫ້າ:** ສືບຕໍ່ຊີ້ນຳການກະກຽມກອງປະຊຸມໃຫຍ່ຂອງບາງອົງຄະນະພັກຂັ້ນສູນກາງ, ກອງປະຊຸມວຽກງານຕ່າງໆ ເປັນຕົ້ນວຽກງານຈັດຕັ້ງ, ວຽກງານກວດກາ, ວຽກງານຫ້ອງວ່າການ, ວຽກງານສື່ມວນຊົນ, ວຽກກໍ່ສ້າງຮາກຖານການເມືອງ, ພັດທະນາຊົນນະບົດ-ແກ້ໄຂຄວາມທຸກຍາກ ແລະ ວຽກງານ 3 ສ້າງ ແລະ ອື່ນໆ...

**ຫົກ:** ຊີ້ນຳການສືບຕໍ່ຍູ້ແຮງຂະບວນການ ແຂ່ງຂັນຮັກຊາດ ແລະ ພັດທະນາ ໃຫ້ແຂງແຮງ, ກວ້າງຂວາງ, ທົ່ວເຖິງ ແລະ ຕໍ່ເນື່ອງ; ສ້າງໃຫ້ມີການຫັນປ່ຽນໃໝ່ທີ່ຕັ້ງໜ້າກວ່າເກົ່າ, ມີແບບຢ່າງດີເດັ່ນໃນການແຂ່ງຂັນຜະລິດ-ທຸລະກິດ, ການຍົກສູງຈິດໃຈຮັກຊາດ, ການສ້າງເສດຖະກິດເອກະລາດ ເປັນເຈົ້າຕົນເອງ, ເພິ່ງຕົນເອງ, ສ້າງຄວາມເຂັ້ມແຂງດ້ວຍຕົນເອງ ໃຫ້ສູງຂຶ້ນ.

ສະຫາຍເລຂາທິການໃຫຍ່ ຍັງໄດ້ຊີ້ນຳການກະກຽມກອງປະຊຸມຄົບຄະນະ ຄັ້ງທີ 3 ຂອງຄະນະບໍລິຫານງານສູນກາງພັກ ສະໄໝທີ XII, ລົງເລິກຫົວຂໍ້ຍຸດທະສາດທີ່ເປັນບຸລິມະສິດໃນນັ້ນ, ໃຫ້ຄົ້ນຄວ້າ ແລະ ກະກຽມແຜນລະອຽດກ່ຽວກັບການປະກາດເອົາວຽກງານພັດທະນາຊົນນະບົດຮອບດ້ານ ແລະ ແກ້ໄຂຄວາມທຸກຍາກ ເປັນວາລະແຫ່ງຊາດ; ໃນເງື່ອນໄຂສະພາບແວດລ້ອມພາກພື້ນ ແລະ ສາກົນມີຄວາມເຄັ່ງຮ້ອນ, ສັບສົນ ແລະ ຜັນແປໄວວາ ກໍຄືໃນເງື່ອນໄຂທີ່ປະເທດເຮົາຈະອອກຈາກສະຖານະພາບດ້ອຍພັດທະນາ, ຕ້ອງສືບຕໍ່ຊີ້ນຳວຽກງານຕ່າງປະເທດໃຫ້ແຂງແຮງກວ່າເກົ່າ, ເປັນເຈົ້າການກວ່າເກົ່າແລະຢູ່ໃນທ່າບຸກກວ່າເກົ່າ, ສາມາດສ້າງສະພາບແວດລ້ອມທີ່ເອື້ອອຳນວຍໃຫ້ແກ່ການປົກປັກຮັກສາ ແລະ ພັດທະນາປະເທດຊາດ.

ສະຫາຍ ທອງລຸນ ສີສຸລິດ ໄດ້ສະແດງຄວາມເຊື່ອໝັ້ນວ່າ ບັນດາສະຫາຍກຳມະການສູນກາງພັກ ຈະພ້ອມພຽງຮຽງໜ້າກັນເສີມຂະຫຍາຍມານະຈິດປະຕິວັດ ແລະ ທາດແທ້, ມູນເຊື້ອອັນສະຫງ່າລາສີຂອງພັກກໍຄືຂອງອົງການນຳສູງສຸດຂອງພັກເຮົາ ໃຫ້ສູງຂຶ້ນເລື້ອຍໆ ເພື່ອຈັດຕັ້ງຜັນຂະຫຍາຍມະຕິກອງປະຊຸມໃຫຍ່ ຄັ້ງທີ XII ຂອງພັກເຂົ້າສູ່ຂະບວນການຕົວຈິງ ຢ່າງມີໄຊ.




# ຖອດຖອນບົດຮຽນວຽກງານຫ້ອງມູນເຊື້ອ



(ສພຊ)-ວັນທີ 24 ກຸມພາ 2026 ທີ່ສະພາແຫ່ງຊາດ (ສພຊ) ໄດ້ມີກອງປະຊຸມຖອດຖອນບົດຮຽນກ່ຽວກັບການສ້າງຕັ້ງຫ້ອງມູນເຊື້ອ ລະຫວ່າງກົມສື່ມວນຊົນ, ຫ້ອງວ່າການສະພາແຫ່ງຊາດກັບກົມປະຊາສຳພັນ, ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ໂດຍມີທ່ານ ແກ້ວລະກາ ຊ້ອຍໄຊຍະ ຮອງຫົວໜ້າກົມສື່ມວນຊົນ, ທ່ານ ສົມສຳເລັດ ທະວີຄຳ ຮອງຫົວໜ້າກົມປະຊາສຳພັນ ພ້ອມດ້ວຍຄະນະພະແນກຂອງສອງພາກສ່ວນເຂົ້າຮ່ວມ.

ກອງປະຊຸມໄດ້ຮັບຟັງກ່ຽວກັບການສ້າງຕັ້ງຫ້ອງມູນເຊື້ອໃນໄລຍະກະກຽມຈົນຮອດປັດຈຸບັນ ເປັນຕົ້ນ: ໂຄງຮ່າງການຈັດຕັ້ງ ແລະ ບຸກຄະລາກອນ, ການຊອກແຫຼ່ງງົບປະມານ, ການເກັບກຳຂໍ້ມູນ, ການຂຽນບົດປະຫວັດສາດ, ການຂຽນບົດບັນລະຍາຍ ແລະ ການອອກແບບໜ້າພຽງ ຈົນເຖິງການຂໍຄວາມຮ່ວມມືກັບລູກຫຼານອະດີດການນຳ ເພື່ອຂໍຂໍ້ມູນຮູບພາບ ແລະວັດຖຸພັນຂອງຫ້ອງມູນເຊື້ອ ແລະ ປະຫວັດສາດສະພາແຫ່ງຊາດ; ຈາກນັ້ນ, ໄດ້ມີການແລກປ່ຽນ, ຖອດຖອນບົດຮຽນແຕ່ລະບັນຫາທີ່ມີຄວາມສົນໃຈແລະພ້ອມກັນຢ້ຽມຊົມສະຖານທີ່ຕົວຈິງແລະມອບປຶ້ມທີ່ລະນຶກຂອງ ສພຊ ໃຫ້ຄະນະທີ່ມາແລກປ່ຽນອີກດ້ວຍ.

**(ນາງ ນິດຕາ ຄຸນປາກດີ)**

## ເຜີຍແຜ່...

(ຕໍ່ຈາກໜ້າ 1)

ສູນກາງ ແລະ ທ້ອງຖິ່ນ.

ສະຫາຍ ທອງລຸນ ສີສຸລິດ ໄດ້ເນັ້ນໜັກເຖິງຄວາມໝາຍຄວາມສຳຄັນຂອງກອງປະຊຸມ ເຊິ່ງຖືເປັນການເປີດສາກໃຫ້ແກ່ການເລີ່ມຕົ້ນຜັນຂະຫຍາຍມະຕິກອງປະຊຸມໃຫຍ່ຄັ້ງທີXII ຂອງພັກ ເພື່ອແນໃສ່ ໜຶ່ງ: ສ້າງຄວາມຮັບຮູ້, ເຂົ້າໃຈທີ່ເລິກເຊິ່ງຕໍ່ເນື້ອໃນຈິດໃຈສຳຄັນຂອງແນວທາງການເມືອງ ແລະ ແນວທາງການຈັດຕັ້ງ ທີ່ໄດ້ກຳນົດອອກໃນກອງປະຊຸມໃຫຍ່ ຄັ້ງທີ XII ຂອງພັກຢ່າງເປັນລະບົບ; ສອງ: ເຊື່ອມຊຶມ, ກຳແໜ້ນເນື້ອໃນທີ່ຈະໄດ້ນຳພາຊີ້ນຳການຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດຕົວຈິງ; ສາມ: ສ້າງໃຫ້ໄດ້ແຜນດຳເນີນງານ, ແຜນປະຕິບັດງານລະອຽດຂອງແຕ່ລະຂະແໜງການ ແລະທ້ອງຖິ່ນທີ່ກຳນົດລະອຽດໜ້າວຽກ, ແຜນຄົນ, ແຜນເງິນ, ຄວາມຮັບຜິດຊອບ, ກຳນົດເວລາຊັດເຈນ, ແທດຕົວຈິງ ແລະ ສາມາດຈັດຕັ້ງປະຕິບັດໃຫ້ມີຜົນສຳເລັດເປັນຮູບປະທຳ; ສີ່: ມີກົນໄກ, ລະບອບແບບແຜນການຊີ້ນຳ, ບັນຊາ, ຕິດຕາມ, ກວດກາ, ການຊຸກຍູ້ຈັດຕັ້ງປະຕິບັດທີ່ຖືກຕ້ອງ, ແທດເຖິງ ແລະ ມີວິທະຍາສາດ; ຫ້າ: ມີຄວາມເປັນເອກະພາບສູງຢູ່ພາຍໃນ, ມີຄວາມຕັດສິນໃຈອັນເດັດດ່ຽວ, ກ້າຫານ, ປະດິດສ້າງ ເພື່ອຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່ ຄັ້ງທີ XII ຂອງພັກ ເຂົ້າສູ່ລວງເລິກ ແລະ ເປັນຮູບປະທຳ. ສະຫາຍເລຂາທິການໃຫຍ່ ຍັງໄດ້ເນັ້ນຕື່ມວ່າ: ການເຜີຍແຜ່, ເຊື່ອມຊຶມ ເອກະສານກອງປະຊຸມໃຫຍ່ໃນຄັ້ງນີ້ ແມ່ນການສືບຕໍ່ບຸກທະລຸທາງດ້ານຈິນຕະນາການ, ຍົກສູງຫຼັກໝັ້ນການເມືອງ ໃຫ້ມີຄວາມເດັດດ່ຽວໜຽວແໜ້ນ, ບໍ່ຫວັ່ນໄຫວຄອນແຄນຕໍ່ສະພາບການຕ່າງໆ; ຕ້ານ ແລະ ແກ້ໄຂທັດສະນະຜິດເຂວຕ່າງໆ, ລັດທິຄຳພີກົນຈັກ; ຮັກສາຄວາມສາມັກຄີເປັນເອກະພາບພາຍໃນພັກ ແລະ ພາຍໃນສັງຄົມ ໃຫ້ໜັກແໜ້ນຍິ່ງຂຶ້ນ; ພ້ອມກັນຍູ້ແຮງການຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດຕົວຈິງ, ເຮັດໃຫ້ກາຍເປັນຂະບວນການອັນກວ້າງຂວາງຂອງມະຫາຊົນ, ຂອງທົ່ວສັງຄົມ ເພື່ອນຳເອົາຜົນປະໂຫຍດຕົວຈິງມາໃຫ້ປະເທດຊາດ ແລະ ປະຊາຊົນ ກໍຄືເຮັດໃຫ້ການນຳພາປົກປັກຮັກສາ ແລະ ພັດທະນາປະເທດຊາດ ໄປຖືກຕ້ອງຕາມທິດທີ່ໄດ້ກຳນົດໄວ້ຢ່າງໜັກແໜ້ນ.



ທີ່ກອງປະຊຸມ, ສະຫາຍ ພົອ. ວິໄລ ຫຼ້າຄຳຟອງ ກຳມະການກົມການເມືອງສູນກາງພັກ, ຜູ້ປະຈຳການຄະນະເລຂາທິການສູນກາງພັກ ໄດ້ເຜີຍແຜ່ເນື້ອໃນຈິດໃຈສຳຄັນຂອງໂຄງການການເມືອງ ສະບັບທີ 3 ເຊິ່ງແມ່ນຖະແຫຼງການສັງລວມຫຍໍ້, ມີຄວາມຈະແຈ້ງ ແລະ ມີຄວາມຊັດເຈນ, ຊີ້ໃຫ້ເຫັນທຸກໆບັນຫາທີ່ພັກຢາກບັນລຸໄດ້ຕາມຈຸດປະສົງເປົ້າໝາຍທີ່ຕັ້ງໄວ້ ທັງແມ່ນທິດສະດີປະຕິວັດຂອງພັກ, ປຽບເໝືອນທວນໄຟເຍືອງທາງໃຫ້ປະຊາຊົນລາວບັນດາເຜົ່າ ເຮັດການປະຕິວັດຢ່າງມີໄຊ. ສະຫາຍ ພົອ. ວິໄລ ຫຼ້າຄຳຟອງ ໄດ້ຍົກໃຫ້ເຫັນຄວາມໝາຍສຳຄັນຂອງໂຄງການການເມືອງວ່າ: ພັກເຮົາ ນັບແຕ່ມື້ສ້າງຕັ້ງຂຶ້ນ ໄດ້ວາງໂຄງການການເມືອງອອກ 2 ຄັ້ງຄື: ຄັ້ງທີ I ໃນປີ 1955 ເປັນໂຄງການການເມືອງສະບັບທຳອິດຂອງພັກທີ່ໄດ້ກຳນົດທິດນຳ ແລະ ຖືເປັນແນວທາງໃຫ້ພັກເຮົາດຳເນີນພາລະກິດຕໍ່ສູ້ຕ້ານການຮຸກຮານຈາກຈັກກະ ພັດລ່າເມືອງຂຶ້ນ ແລະ ລູກມືຂາຍຊາດ; ຄັ້ງທີ II ໃນປີ1972ເປັນໂຄງການການເມືອງທີ່ວາງອອກເພື່ອເຮັດສຳເລັດການປະຕິວັດຊາດປະຊາທິປະໄຕ, ນຳພາປະເທດຊາດກ້າວຂຶ້ນສູ່ສັງຄົມນິຍົມ. ການສ້າງໂຄງການການເມືອງສະບັບໃໝ່ຂອງພັກໃນໄລຍະໃໝ່ແມ່ນຕອບສະໜອງສະພາບການເລັ່ງທວງໃໝ່, ໜ້າທີ່ໃໝ່ຂອງການປະຕິວັດລາວ, ໜ້າທີ່ແຫ່ງການຍູ້ແຮງພາລະກິດປ່ຽນແປງໃໝ່ໃຫ້ເຂົ້າສູ່ລວງເລິກດ້ວຍການສ້າງການຫັນປ່ຽນຢ່າງແຂງແຮງ, ເລິກເຊິ່ງ, ຮອບດ້ານ ແລະສ້າງເສດຖະກິດເອກະລາດເປັນເຈົ້າຕົນເອງ ແນໃສ່ນຳພາປະເທດຊາດກ້າວຂຶ້ນສູ່ສັງຄົມນິຍົມຢ່າງໜັກແໜ້ນ.

ສຳລັບໂຄງການການເມືອງ ສະບັບທີ 3 ແມ່ນໂຄງການການເມືອງ “ບູລະນະລະບອບປະຊາທິປະໄຕປະຊາຊົນກ້າວຂຶ້ນສູ່ສັງຄົມນິຍົມ” ແມ່ນການສືບຕໍ່ປະຕິບັດແນວທາງປ່ຽນແປງໃໝ່ທີ່ປະທານ ໄກສອນ ພົມວິຫານ ເປັນຜູ້ລິເລີ່ມ ແລະ ເປັນສະຖາປະນິກຕົ້ນຕໍ ທີ່ປະໄວ້ໃຫ້ພວກເຮົາສືບທອດຕໍ່ໄປຢ່າງບໍລິສຸດ ແລະ ຈົງຮັກພັກດີໂດຍໄດ້ກຳນົດຈຸດໝາຍຮອດປີ 2055 ເມື່ອວັນສ້າງຕັ້ງພັກເຮົາ ຄົບຮອບ 100 ປີ ສູ້ຊົນສ້າງປະເທດເຮົາ ເປັນປະເທດກຳລັງພັດທະນາທີ່ມີລາຍຮັບປານກາງ-ສູງ ຫຍັບເຂົ້າໃກ້ປະເທດທີ່ມີລາຍຮັບສູງ, ມີລະບົບການເມືອງທີ່ເຂັ້ມແຂງ, ມີພື້ນຖານເສດຖະກິດທີ່ທັນສະໄໝ,ກຳລັງການຜະລິດໄດ້ຮັບການພັດທະນາຮອບດ້ານ ໂດຍມີການພົວພັນການຜະລິດທີ່ສອດຄ່ອງແລະກ້າວໜ້າ, ຊີວິດການເປັນຢູ່ຂອງປະຊາຊົນບັນດາເຜົ່າ ໄດ້ມີພື້ນຖານອັນໜັກແໜ້ນກ້າວສູ່ຄວາມອີ່ມໜຳສຳລານ. ໂຄງການການເມືອງສະບັບນີ້ໄດ້ວາງ11ແຜນນະໂຍບາຍໃຫຍ່ ໃນການບູລະນະລະບອບປະຊາທິປະໄຕປະຊາຊົນກ້າວຂຶ້ນສູ່ສັງຄົມນິຍົມເປັນຕົ້ນ: ພັດທະນາເສດຖະກິດຕະຫຼາດຕາມທິດສັງຄົມນິຍົມ ໃຫ້ເປັນລະບົບ, ທັນສະໄໝ; ຫັນເປັນອຸດສາຫະກຳ, ຫັນເປັນທັນສະໄໝ,ຫັນເປັນດີຈີຕອນ;ການປົກປັກຮັກສາ ແລະ ຟື້ນຟູສິ່ງແວດລ້ອມ, ຮັບມືກັບການປ່ຽນແປງດິນຟ້າອາກາດ; ພັດທະນາວັດທະນະທຳ-ສັງຄົມ, ປະຕິບັດຢ່າງສະເໝີຕົ້ນສະເໝີປາຍແນວທາງປົກປັກຮັກສາ ແລະ ເສີມຂະຫຍາຍມູນເຊື້ອວັດທະນະທຳ ແລະ ຮີດຄອງປະເພນີອັນດີງາມຂອງຊາດ; ພັດທະນາຄົນລາວຢ່າງຮອບດ້ານ, ຕອບສະໜອງໄດ້ຄວາມຮຽກຮ້ອງຕ້ອງການຂອງການພັດທະນາປະເທດຊາດໃນໄລຍະໃໝ່; ສ້າງເຫງົ້າພະລັງປ້ອງກັນຊາດ-ປ້ອງກັນຄວາມສະຫງົບທົ່ວປວງຊົນຮອບດ້ານທີ່ມີຄວາມໜັກແໜ້ນ,ເຂັ້ມແຂງ ແລະ ມີແບບແຜນທັນສະໄໝ; ຍຶດໝັ້ນແນວທາງການຕ່າງປະເທດຂອງພັກ, ສ້າງເງື່ອນໄຂອຳນວຍໃຫ້ແກ່ພາລະກິດປົກປັກຮັກສາແລະສ້າງສາປະເທດຊາດ; ສ້າງພັກໃຫ້ປອດໃສ, ເຂັ້ມແຂງ, ໜັກແໜ້ນ ຮັບປະກັນການກຳອຳນາດຂອງພັກ ໃຫ້ມີຄວາມໝັ້ນຄົງ; ສ້າງລັດປະຊາທິປະໄຕປະຊາຊົນ ທີ່ປົກຄອງດ້ວຍກົດໝາຍ; ເສີມຂະຫຍາຍມະຫາສາມັກຄີທົ່ວປວງຊົນ, ປະຕິບັດແນວທາງມະຫາສາມັກຄີທົ່ວປວງຊົນຢ່າງໜັກແໜ້ນ, ເສີມຂະຫຍາຍສິດເປັນເຈົ້າຂອງປະຊາຊົນຢ່າງບໍ່ຢຸດຢັ້ງ.

ເພື່ອເຮັດໃຫ້ໂຄງການການເມືອງຂອງພັກ ໄດ້ຮັບການຈັດຕັ້ງຜັນຂະຫຍາຍສູ່ລວງເລິກ, ພັກເຮົາຕ້ອງສືບຕໍ່ຍຶດໝັ້ນຢ່າງສະເໝີຕົ້ນສະເໝີປາຍ ບັນດາຫຼັກການ ແລະ ທັດສະນະພື້ນຖານ ໃນການຍູ້ແຮງການຈັດຕັ້ງປະຕິບັດແນວທາງປ່ຽນແປງໃໝ່ຂອງພັກເຮົາ ໂດຍສະເພາະການປ່ຽນແປງໃໝ່, ການສະແຫວງຫາສັດຈະທຳໃນການນຳພາຂອງພັກ ແມ່ນພາລະກິດປະຕິວັດອັນເລິກເຊິ່ງເຖິງຖອງ ທີ່ຕ້ອງດຳເນີນການຢ່າງຮອບດ້ານ, ຕໍ່ເນື່ອງ ແລະ ຍາວນານ; ເຊີດຊູນ້ຳໃຈຮັກຊາດອັນດູດດື່ມ, ສະຕິຊາດເອກະພາບອັນສູງສົ່ງ ແລະ ຮັກລະບອບໃໝ່ຢ່າງສຸດຊຶ້ງ ໄປພ້ອມກັບການເສີມຂະຫຍາຍຈິດໃຈເອກະລາດ, ເປັນເຈົ້າຕົນເອງ ແລະ ສ້າງຄວາມເຂັ້ມແຂງດ້ວຍຕົນເອງຢ່າງຮອບດ້ານ ຕິດພັນກັບການຍົກສູງຄວາມເປັນເຈົ້າໃນການເຊື່ອມໂຍງກັບພາກພື້ນ ແລະສາກົນທັງເພີ່ມທະວີຄວາມສາມັກຄີພາຍໃນ, ມີຄວາມເປັນເອກະພາບສູງທາງດ້ານການເມືອງ, ແນວຄິດ, ການຈັດຕັ້ງ ແລະ ການເຄື່ອນໄຫວ ໃນທົ່ວພັກ ແລະ ໃນສັງຄົມ; ຕ້ອງຖືສຳຄັນພັດທະນາຊັບພະຍາກອນມະນຸດ, ພູມປັນຍາຂອງຄົນໃນຊາດ, ຮັບປະກັນຄວາມສົມສ່ວນ ລະຫວ່າງພັດທະນາເສດຖະກິດ ກັບ ການພັດທະນາວັດທະນະທຳ-ສັງຄົມ ແລະ ປົກປັກຮັກສາສິ່ງແວດລ້ອມຕາມທິດສີຂຽວ ແລະ ຍືນຍົງ, ລະຫວ່າງພັດທະນາເສດຖະກິດກັບວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ; ຍົກສູງປະສິດທິພາບການຄຸ້ມຄອງລັດ, ຄຸ້ມຄອງເສດຖະກິດ-ສັງຄົມ ຕາມທິດສ້າງລັດປະຊາທິປະໄຕປະຊາຊົນ ທີ່ປົກຄອງດ້ວຍກົດໝາຍທີ່ສັກສິດແລະສະເໝີພາບພາຍໃຕ້ການນຳພາຂອງພັກ; ເສີມຂະຫຍາຍສິດເປັນເຈົ້າຂອງປະຊາຊົນ,ສ້າງເງື່ອນໄຂໃຫ້ປະຊາຊົນບັນດາເຜົ່າ ໄດ້ເຂົ້າຮ່ວມການຄຸ້ມຄອງລັດ, ຄຸ້ມຄອງເສດຖະກິດ-ສັງຄົມດ້ວຍຄວາມຮັບຜິດຊອບສູງ ຕໍ່ພັນທະ, ໜ້າທີ່ຂອງພົນລະເມືອງລາວ ຕາມລັດຖະທຳມະນູນ ແລະກົດໝາຍ; ເພີ່ມຄວາມສາມາດນຳພາ ແລະ ກຳລັງແຮງສູ້ຮົບ ຂອງຄະນະພັກແຕ່ລະຂັ້ນໃນທຸກຂົງເຂດວຽກງານ, ສືບຕໍ່ສ້າງຮາກຖານພັກໃຫ້ປອດໃສ, ເຂັ້ມແຂງ, ໜັກແໜ້ນເປັນກຳລັງແຮງໃຫ້ແກ່ການຂັບເຄື່ອນການນຳພາ-ຊີ້ນຳຂອງຄະນະພັກໃນລະບົບການເມືອງຢູ່ແຕ່ລະຂັ້ນ; ປັບປຸງລະບອບແບບແຜນ, ກົນໄກການນຳພາຂອງພັກ ແລະ ການຄຸ້ມຄອງ-ບໍລິຫານຂອງລັດໃຫ້ຖືກຕ້ອງຕາມຫຼັກວິທະຍາສາດ ແລະ ສອດຄ່ອງກັບຈຸດພິເສດຂອງປະເທດເຮົາ; ເພີ່ມທະວີການນຳພາເດັດຂາດ, ໂດຍກົງ, ຮອບດ້ານຂອງພັກ ຕໍ່ກຳລັງປະກອບອາວຸດປະຕິວັດ, ການປະຕິບັດແນວທາງນະໂຍບາຍການຕ່າງປະເທດທີ່ຄ່ອງແຄ້ວ, ມີໄຫວພິບ ເພື່ອຮັບປະກັນຄວາມໝັ້ນຄົງຂອງຊາດ, ສ້າງເງື່ອນໄຂສະພາບແວດລ້ອມທີ່ສະດວກໃຫ້ແກ່ການປົກປັກຮັກສາ ແລະ ສ້າງສາປະເທດຊາດ.



ຈາກນັ້ນ, ສະຫາຍ ສອນໄຊ ສີພັນດອນ ກຳມະການກົມການເມືອງສູນກາງພັກ, ນາຍົກລັດຖະມົນຕີ ໄດ້ເຜີຍແຜ່ເນື້ອໃນຈິດໃຈສຳຄັນຂອງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີຄັ້ງທີ X (2026-2030) ເຊິ່ງລວມມີ 3 ພາກຄື: ພາກທີ I ສະຫຼຸບຕີລາຄາການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ5 ປີ ຄັ້ງທີ IX (2021-2025), ພາກທີ II ທິດທາງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ X (2026-2030), ພາກທີ III ມາດຕະການ, ນະໂຍບາຍ ແລະ ກົນໄກການຈັດຕັ້ງປະຕິບັດ.

ໃນໂອກາດດັ່ງກ່າວ, ສະຫາຍ ທອງລຸນ ສີສຸລິດ ໄດ້ມີຄຳເຫັນວ່າ: ເພື່ອຮັບປະກັນໃຫ້ແຕ່ລະແນວທາງໄດ້ອອກສູ່ການປະຕິບັດຢ່າງເປັນລະບົບ, ທັນສະພາບການ ກ່ອນອື່ນ, ຕ້ອງສຸມໃສ່ຍົກສູງຄວາມສາມາດໃນການຫັນເປັນນິຕິກຳ ໂດຍຫັນມະຕິໃຫ້ອອກເປັນກົດໝາຍຢ່າງທັນການ ແລະ ຮັດກຸມ ເພື່ອໃຫ້ມີລະບົບນິຕິກຳ, ກົນໄກປະຕິບັດຢ່າງເປັນເອກະພາບທີ່ສາມາດປະຕິບັດໄດ້; ຕ້ອງຮີບຮ້ອນປັບປຸງລະບຽບວິໄນ ແລະ ວິທີການຈັດຕັ້ງປະຕິບັດແບບໃໝ່; ການພັດທະນາໃດໆຕ້ອງຖືເອົາປະຊາຊົນເປັນກົກ, ເອົາຊົນນະບົດເປັນເປົ້າໝາຍ ດັ່ງນັ້ນ, ການພັດທະນາໃດໆ ກໍຕ້ອງຄຳນຶງເຖິງຄວາມເພິ່ງພໍໃຈຂອງປະຊາຊົນເປັນໄມ້ຫຼາວັດແທກ; ພັດທະນາຄົນ ໂດຍສະເພາະສ້າງຖັນແຖວພະນັກງານໃຫ້ມີຄວາມສາມາດຈັດຕັ້ງປະຕິບັດມະຕິ, ແນວທາງນະໂຍບາຍ, ແຜນພັດທະນາເສດຖະກິດ-ສັງຄົມຂອງປະເທດໃຫ້ໄດ້ນັບມື້ນັບຫຼາຍ, ນັບມື້ນັບແຂງແຮງ, ມີຄຸນທາດການເມືອງ, ຄຸນສົມບັດສິນທຳປະຕິວັດແລະຫັນເປັນມືອາຊີບ; ພະນັກງານຂັ້ນນຳ, ຂັ້ນປະຕິບັດໜ້າທີ່ທີ່ຖືກມອບໝາຍ ຕ້ອງເປັນຄົນກ້າຄິດ, ກ້າປະດິດສ້າງ, ກ້າອອກແບບ, ກ້າລົງມືປະຕິບັດ ແລະ ກ້າຮັບຜິດຊອບໃນວຽກງານ;ຕ້ອງແກ້ໄຂພະນັກງານເລືອກວຽກ, ພະນັກງານທີ່ຂັດເອົາແຕ່ວຽກທີ່ຕົນມັກຕົນຢາກໄດ້; ພັກຕ້ອງຕັດສິນໃຈປັບປຸງປ່ຽນແປງໃໝ່ວິທີການແບບແຜນການນຳພາເພື່ອຍົກປະສິດທິພາບຂອງການບໍລິຫານປະເທດ, ພັກນຳພາຕ້ອງຄຳນຶງເຖິງຄວາມເປັນແບບຢ່າງ ແລະ ດ້ວຍບົດບາດອິດທິພົນທາງການເມືອງ ໂດຍຜ່ານວຽກງານຕິດຕາມກວດກາ.



ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ຄະນະກຳມະການເລືອກຕັ້ງລະດັບຊາດ

ເລກທີ 91 /ຄລຊ

ນະຄອນຫຼວງວຽງຈັນ, ວັນທີ 02/03/26

## ປະກາດແຈ້ງການ
## ຂອງຄະນະກຳມະການເລືອກຕັ້ງລະດັບຊາດ
## ກ່ຽວກັບລາຍຊື່ຜູ້ໄດ້ຮັບເລືອກຕັ້ງ ເປັນສະມາຊິກສະພາແຫ່ງຊາດ ຊຸດທີ X

- ອີງຕາມ ມາດຕາ 11 ຂອງກົດໝາຍ ວ່າດ້ວຍການເລືອກຕັ້ງ ສະມາຊິກສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ສະບັບເລກທີ 58/ສພຊ, ລົງວັນທີ 28 ມິຖຸນາ 2024;
- ອີງຕາມ ລັດຖະດຳລັດ ຂອງປະທານປະເທດ ສະບັບເລກທີ 338/ປປທ, ລົງວັນທີ 30 ທັນວາ 2025 ວ່າດ້ວຍການປະກາດຈຳນວນຜູ້ສະໝັກຮັບເລືອກຕັ້ງເປັນສະມາຊິກ ສະພາແຫ່ງຊາດ ຊຸດທີ X ແລະ ສະພາປະຊາຊົນຂັ້ນແຂວງ ຊຸດທີ V;
- ອີງຕາມ ຜົນການປ່ອນບັດເລືອກຕັ້ງສະມາຊິກສະພາແຫ່ງຊາດ ຊຸດທີ X ແລະ ສະມາຊິກສະພາປະຊາຊົນຂັ້ນແຂວງ ຊຸດທີ V ໃນວັນທີ 22 ກຸມພາ 2026.

ຄະນະກຳມະການເລືອກຕັ້ງລະດັບຊາດ ປະກາດລາຍຊື່ຜູ້ທີ່ໄດ້ຮັບການເລືອກຕັ້ງ ເປັນສະມາຊິກສະພາແຫ່ງຊາດ ຊຸດທີ X ຢູ່ເຂດເລືອກຕັ້ງຕ່າງໆ ໃນຂອບເຂດທົ່ວປະເທດ ຊຶ່ງມີລາຍລະອຽດ ດັ່ງນີ້:

**1. ເຂດເລືອກຕັ້ງທີ 1 ນະຄອນຫຼວງວຽງຈັນ ຈຳນວນ 19 ທ່ານ, ຍິງ 6 ທ່ານ ມີລາຍຊື່ ດັ່ງນີ້:**

1) ທ່ານ ປອ. ໄຊສົມພອນ ພົມວິຫານ
2) ທ່ານ ປອ. ອາລະພັງທອງ ສີພັນດອນ
3) ທ່ານ ທະນົງໄຊ ຄູດໄພທູນ
4) ທ່ານ ປອ. ໄຊນະຄອນ ອິນທະວົງ
5) ທ່ານ ນາງ ວິໄຊ ສຣິດທິຣາດ
6) ທ່ານ ນາງ ດາລານີ ພົມມະວົງສາ
7) ທ່ານ ປອ. ດູດາວັນ ທຳເມືອງສາ
8) ທ່ານ ນະຄະເສນ ສີຫາລາດ
9) ທ່ານ ທະນົງສິດ ເມືອງຈັນ
10) ທ່ານ ສອນໄຊ ສີສົມພັນ



11) ທ່ານ ສີວຽງທອງ ສົມພານມີໄຊ
12) ທ່ານ ປອ. ໄພທູນ ທ່ຽງລະໄມ
13) ທ່ານ ນາງ ກັນທິນາ ປັນຍິບທອນ
14) ທ່ານ ສົມບັດ ຈັນທະມາດ
15) ທ່ານ ນາງ ຄຳແພວນ ສິງບັນດິດ
16) ທ່ານ ສົມສະຫວາດ ກົມໄຊຊະນະ
17) ທ່ານ ພົ.ທ ນາດ ເທບພະວົງ
18) ທ່ານ ນາງ ບົວລະພັນ ທິລະສັກ
19) ທ່ານ ນາງ ຈຳປາທອງ ທະລົງແສງຈັນ

**2. ເຂດເລືອກຕັ້ງທີ 2 ແຂວງຜົ້ງສາລີ ຈຳນວນ 07 ທ່ານ, ຍິງ 1 ທ່ານ ມີລາຍຊື່ ດັ່ງນີ້:**

1) ທ່ານ ພົ.ຕ ສົມພອນ ມີດຕະພອນ
2) ທ່ານ ພົ.ວ ສຸລິນພອນ ຄຳມະຈັນ
3) ທ່ານ ສົມຈິດ ທັບລະກອນ
4) ທ່ານ ຈິດຕະພອນ ເມກດາລາ
5) ທ່ານ ປອ. ກຳລະກັນ ພົມມະວົງ
6) ທ່ານ ນາງ ຈັນມະນີ ດວງພາຊຸກ
7) ທ່ານ ຄຳພັນ ຄູນສົມບັດ

**3. ເຂດເລືອກຕັ້ງທີ 3 ແຂວງຫຼວງນ້ຳທາ ຈຳນວນ 07 ທ່ານ, ຍິງ 3 ທ່ານ ມີລາຍຊື່ ດັ່ງນີ້ .**

1) ທ່ານ ນາງ ອຳໄພວອນ ລໍຄຳບຸນແພງ
2) ທ່ານ ພົ.ທ ຄຳທົ່ງ ພຸຍຫຼ້ານະມີວົງ
3) ທ່ານ ກົງເພັດ ແກ້ວບົວພາ
4) ທ່ານ ນາງ ເກສອນ ແສງຍະວົງ
5) ທ່ານ ຈັນທະສຸລິນ ໝັ້ນປະກິດ
6) ທ່ານ ນາງ ປານິດາ ເຮືອງແພງອ່ອນ
7) ທ່ານ ພົ.ອ ພອນແກ້ວ ພົງແສນຫຼວງ

**4. ເຂດເລືອກຕັ້ງທີ 4 ແຂວງອຸດົມໄຊ ຈຳນວນ 08 ທ່ານ, ຍິງ 4 ທ່ານ ມີລາຍຊື່ ດັ່ງນີ້:**

1) ທ່ານ ບຸນຄົງ ຫຼ້າຈຽມພອນ
2) ທ່ານ ນາງ ວິລະວອນ ພົນທະວົງ
3) ທ່ານ ແກ້ວຈະເລີນ ເຊ່ຍຢື້ງຢາງ
4) ທ່ານ ນາງ ຄຳໝັ້ນ ແກ້ວບຸນທອນ
5) ທ່ານ ດຣ ນາງ ສິດທິວອນ ທົງສາຄອນ
6) ທ່ານ ນາງ ມະນີຈູ ຢາຈົງວາ
7) ທ່ານ ຄອນສີ ໄຊຍະມອນ



8) ທ່ານ ພົ.ທ ແກ້ວວິເສດ ວຸກສອນບ້ອຍ

**5. ເຂດເລືອກຕັ້ງທີ 5 ແຂວງບໍ່ແກ້ວ ຈຳນວນ 07 ທ່ານ, ຍິງ 3 ທ່ານ ມີລາຍຊື່ ດັ່ງນີ້:**

1) ທ່ານ ພົ.ວ ແປັນຄຳ ບຸດຈັນແພງ
2) ທ່ານ ນາງ ທຸມມາລີ ວົງມະຈັນ
3) ທ່ານ ດາລີວັນ ພຸສະຫວັນ
4) ທ່ານ ພົ.ວ ປອ. ຄຳແພງ ວັນດີໄຊ
5) ທ່ານ ນາງ ບົວຄົມ ຂານສຸວົງ
6) ທ່ານ ນາງ ສີອຳໄພ ໄສລະຖີ
7) ທ່ານ ພົ.ອ ຄຳແດງ ວັນນະສິດ

**6. ເຂດເລືອກຕັ້ງທີ 6 ແຂວງຫຼວງພະບາງ ຈຳນວນ 10 ທ່ານ, ຍິງ 3 ທ່ານ ມີລາຍຊື່ ດັ່ງນີ້:**

1) ທ່ານ ໄພວີ ສີບົວລິພາ
2) ທ່ານ ບຸນເລື່ອມ ມະນີວົງ
3) ທ່ານ ສຳນານ ສົມທະນີ
4) ທ່ານ ສົມພອນ ສີອຸດົມພັນ
5) ທ່ານ ນາງ ພັນຈິນດາ ເຕັ້ງສະຫວັດ
6) ທ່ານ ສົມມາລີ ຄຳທັ່ງ
7) ທ່ານ ນາງ ບົວສອນ ໄຊຍະໄຊ
8) ທ່ານ ນາງ ຈັນດີ ເຢັງວີ
9) ທ່ານ ປອ. ສຸລິໄຊ ທົງສາຄອນ
10)ທ່ານ ພົ.ອ ວິລະສິນ ມິດຕະພອນ

**7. ເຂດເລືອກຕັ້ງທີ 7 ແຂວງໄຊຍະບູລີ ຈຳນວນ 09 ທ່ານ, ຍິງ 3 ທ່ານ ມີລາຍຊື່ ດັ່ງນີ້:**

1) ທ່ານ ເພັງນີລັນ ຄຳພັນເພັງ
2) ທ່ານ ມີໄຊ ພົມແຂ
3) ທ່ານ ພົ.ຕ ໄພວັນ ຈັນທະພົມມາ
4) ທ່ານ ນາງ ໄກຍະສອນ ສີດາ
5) ທ່ານ ກາວີ ເກດຄົມລີ
6) ທ່ານ ນາງ ວັນນາ ພົມວິສອນ
7) ທ່ານ ນາງ ແສງມະນີ ຢາທໍ່ຕູ້
8) ທ່ານ ປອ. ແອວເພັດ ສີບຸນມາ
9) ທ່ານ ປອ. ຄຳແສນ ສີສະວົງ

**8. ເຂດເລືອກຕັ້ງທີ 8 ແຂວງຫົວພັນ ຈຳນວນ 07 ທ່ານ, ຍິງ 3 ທ່ານ ມີລາຍຊື່ ດັ່ງນີ້:**

1) ທ່ານ ພຸດພັນ ແກ້ວວົງໄຊ
2) ທ່ານ ນາງ ສອຍເພັດ ທອງສົມບັດ



3) ທ່ານ ນາງ ພອງທຳ ທຳມະທອງ
4) ທ່ານ ໃຈເພັດ ເຮືອງຖາວອນ
5) ທ່ານ ໄຊຍະແສງ ຊົງປົງຢາ
6) ທ່ານ ແສງສຸວັນ ວົງຄຳ
7) ທ່ານ ພົ.ອ ນາງ ພວງທອງ ສຸຍະວົງ

**9. ເຂດເລືອກຕັ້ງທີ 9 ແຂວງຊຽງຂວາງ ຈຳນວນ 07 ທ່ານ, ຍິງ 3 ທ່ານ ມີລາຍຊື່ ດັ່ງນີ້:**

1) ທ່ານ ສຈ. ປອ. ກິແກ້ວ ໄຂຄຳພິທູນ
2) ທ່ານ ຮສ. ພູວົງ ອຸ່ນຄຳແສນ
3) ທ່ານ ນາງ ສົມພອນ ໄສພິລາວັນ
4) ທ່ານ ນາງ ສາຍພູເງິນ ອຸດົມສຸກ
5) ທ່ານ ສອນເພັດ ລາມະທອງ
6) ທ່ານ ນາງ ກົງແກ້ວ ພົມມະຈັກ
7) ທ່ານ ພົ.ອ ປິ່ນແກ້ວ ປະອິນພອນ

**10. ເຂດເລືອກຕັ້ງທີ 10 ແຂວງວຽງຈັນ ຈຳນວນ 10 ທ່ານ, ຍິງ 4 ທ່ານ ມີລາຍຊື່ ດັ່ງນີ້:**

1) ທ່ານ ຮສ. ປອ. ທອງສະລິດ ມັງໜໍ່ເມກ
2) ທ່ານ ພຸທະບຸເພັດ ໄຊສົມບັດ
3) ທ່ານ ອິນທະປັນຍາ ຊຽວວົງມະຈັນ
4) ທ່ານ ສີທົນ ແສງມະຈັນ
5) ທ່ານ ນາງ ເພັດສະໝອນ ສອນ
6) ທ່ານ ນາງ ຈັນທະຄອນ ສີອຳພອນ
7) ທ່ານ ນາງ ວົງເດືອນ ວັດຕະໄສ
8) ທ່ານ ດຣ ນາງ ວັນເພັງ ພົນທະນາໄລ
9) ທ່ານ ສີສະໄຫວ ແກ້ວດາລາວົນ
10) ທ່ານ ພົ.ທ ບຸນນຳ ຈັນທອງສີ

**11. ເຂດເລືອກຕັ້ງທີ 11 ແຂວງບໍລິຄຳໄຊ ຈຳນວນ 07 ທ່ານ, ຍິງ 1 ທ່ານ ມີລາຍຊື່ ດັ່ງນີ້:**

1) ທ່ານ ປອ. ກອງແກ້ວ ໄຊສົງຄາມ
2) ທ່ານ ປອ. ສອນທະນູ ທຳມະວົງ
3) ທ່ານ ໄຊອຳພອນ ສີຫາວົງ
4) ທ່ານ ນາງ ຂັນທອງ ພົນທະຈັກ
5) ທ່ານ ປອ. ສາຍທອງ ພົມມະວົງ
6) ທ່ານ ໄຊຍະເພັດ ຈັນທີສອນ
7) ທ່ານ ພົ.ທ ຈອນ ອຸດລາຍັນ

12. ເຂດເລືອກຕັ້ງທີ 12 ແຂວງຄຳມ່ວນ ຈຳນວນ ເອົາ 10 ທ່ານ, ຍິງ 2 ທ່ານ ມີລາຍຊື່ ດັ່ງນີ້:

1) ທ່ານ ປອ. ໄພໃຊ ໄຊຍະສອນ
2) ທ່ານ ໄຊຊະນະ ໂຄດພູທອນ
3) ທ່ານ ປອ. ແກ້ວອຸດອນ ບຸດສີງຂອນ
4) ທ່ານ ປອ. ພູທອນ ວໍລະເພັດ
5) ທ່ານ ສາຍຄຳ ມະໄຊສິດທິເດດ
6) ທ່ານ ນາງ ສຸກຂະເສີມ ສິດທິເດດ
7) ທ່ານ ທອງເພັດ ພຸຍຍະວົງ
8) ທ່ານ ໄພມະນີ ພົມມະສານ
9) ທ່ານ ສົມວິໄຊ ວົງທິລາດ
10) ທ່ານ ນາງ ກ້ອນແກ້ວ ຫຼວງໄຊມຸງຄຸນ

13. ເຂດເລືອກຕັ້ງທີ 13 ແຂວງສະຫວັນນະເຂດ ຈຳນວນ 21 ທ່ານ, ຍິງ 4 ທ່ານ ມີລາຍຊື່ ດັ່ງນີ້:

1) ທ່ານ ປອ. ນາງ ສຸນທອນ ໄຊຍະຈັກ
2) ທ່ານ ບຸນໃຈມ ອຸບົນປະເສີດ
3) ທ່ານ ໄພໃຊ ໄຊຄຳພິທູນ
4) ທ່ານ ໄຊລິຊາ ອິນສີຊຽງໃໝ່
5) ທ່ານ ປອ. ແສນສັກ ສຸລິສັກ
6) ທ່ານ ພອນສານ ວິໄລເມີງ
7) ທ່ານ ປອ. ອາຄົມ ປຣະເສີດ
8) ທ່ານ ແສນສັກ ພົມວົງສາ
9) ທ່ານ ສາລີ ວິນດາວັນ
10) ທ່ານ ປອ. ພູລຳພອນ ສີຫາວົງ
11) ທ່ານ ສີສະຫວາດ ເພັງທະລັງສີ
12) ທ່ານ ໄຊຍະເດດ ພຸຍຍະວົງ
13) ທ່ານ ດຣ ຈັນທະລາ ພານີສິດ
14) ທ່ານ ຄຳພອງ ສົມວິຈິດ
15) ທ່ານ ນາງ ມະໄລທອງ ທຳມະຕິກາ
16) ທ່ານ ປອ. ສຸບັນທາ ຈຸນລະມະນີ
17) ທ່ານ ນາງ ບົວສະຫວັນ ລຸຍບົວທອງ
18) ທ່ານ ໄຊປັນຍາ ພົມວິຫານ
19) ທ່ານ ສົມບູນ ສີຫາບາດ
20) ທ່ານ ນາງ ທົງຄຳ ໄຊຍະຄົມ
21) ທ່ານ ຮສ. ປອ. ສິດທິໄຊ ໄຊຍະວົງ

5

14. ເຂດເລືອກຕັ້ງທີ 14 ແຂວງສາລະວັນ ຈຳນວນ 10 ທ່ານ, ຍິງ 2 ທ່ານ ມີລາຍຊື່ ດັ່ງນີ້:

1) ທ່ານ ປອ. ວິໄລວົງ ບຸດດາຄຳ
2) ທ່ານ ປອ. ດາວວົງ ພອນແກ້ວ
3) ທ່ານ ປອ. ບຸນທັນ ບຸນວິໄລ
4) ທ່ານ ຈັນສະໝອນ ພົມມະແສງ
5) ທ່ານ ຈັນສີລອນ ສີສົມບູນ
6) ທ່ານ ນາງ ວາດສະໜາ ໄພໄຊຍະວົງ
7) ທ່ານ ບຸນເຕີຍ ດວງສຸລິຍະວົງສາ
8) ທ່ານ ເພັດດາ ທັນທະວົງສາ
9) ທ່ານ ນາງ ຄຳພໍ່ ສີລິພະຈັນ
10) ທ່ານ ສົມພອນ ແສງສຸລີຈັນ

15. ເຂດເລືອກຕັ້ງທີ 15 ແຂວງຈຳປາສັກ ຈຳນວນ 15 ທ່ານ, ຍິງ 4 ທ່ານ ມີລາຍຊື່ ດັ່ງນີ້:

1) ທ່ານ ສອນໄຊ ສີພັນດອນ
2) ທ່ານ ປອ. ອາລຸນໄຊ ສູນນະລາດ
3) ທ່ານ ນາງ ມີນາ ສີວິໄລ
4) ທ່ານ ແກ້ວລັດຕະນະ ສີຫາວົງ
5) ທ່ານ ດຣ. ໄພວັນ ແກ້ວປະເສີດ
6) ທ່ານ ນາງ ພອນເພັດ ອຸ່ນແກ້ວ
7) ທ່ານ ສິງຄຳ ວົງພະຈັນ
8) ທ່ານ ວັນນະສັກ ຊາດາຄຸນ
9) ທ່ານ ປອ. ບຸນພະເດດ ທອງສະຫວັນ
10) ທ່ານ ອະນຸສັກ ຈັນທະປະເສີດ
11) ທ່ານ ພູວົງ ອະໄພ
12) ທ່ານ ພົ.ວ ແສງທອງ ທຳມະເທວາ
13) ທ່ານ ນາງ ປານຄຳ ຂະທຍອງເອກ
14) ທ່ານ ນາງ ບຸນສຸວັນ ໄພໄຊຊະນະສັກ
15) ທ່ານ ທີບພະສອນ ສະມາເລີກ

16. ເຂດເລືອກຕັ້ງທີ 16 ແຂວງເຊກອງ ຈຳນວນ 07 ທ່ານ, ຍິງ 2 ທ່ານ ມີລາຍຊື່ ດັ່ງນີ້:

1) ທ່ານ ບຸນຈັນ ສີວົງພັນ
2) ທ່ານ ບຸນຫຼາຍ ບຸດທີ
3) ທ່ານ ຈັນທະບຸນ ສຸກອາລຸນ
4) ທ່ານ ປອ. ຕຸລາວັນ ວົງໄຊ
5) ທ່ານ ນາງ ຄຳໃພ ວິລະສານ

6

6) ທ່ານ ນາງ ໂຣມະນີ ວົງທໍ່ແກ້ວ
7) ທ່ານ ພົ.ອ ຣຽມ ໄຊຍະລາດ

17. ເຂດເລືອກຕັ້ງທີ 17 ແຂວງອັດຕະປື ຈຳນວນ 07 ທ່ານ, ຍິງ 2 ທ່ານ ມີລາຍຊື່ ດັ່ງນີ້:

1) ທ່ານ ບຸນເຖິງ ດວງສະຫວັນ
2) ທ່ານ ພົ.ວ ສຸລິໄຊ ມີຈິດ
3) ທ່ານ ລິດດາ ຂັດທິຍະ
4) ທ່ານ ພູວັນ ພົມມະຈັນ
5) ທ່ານ ນາງ ແສງອາລຸນ ວົງສາທິການ
6) ທ່ານ ນາງ ອ່ອນໄສ ມຽງລາວັນ
7) ທ່ານ ພົ.ອ ບຸນເລີດ ແກ້ວພຸດທະວົງ

18. ເຂດເລືອກຕັ້ງທີ 18 ແຂວງໄຊສົມບູນ ຈຳນວນ 07 ທ່ານ, ຍິງ 2 ທ່ານ ມີລາຍຊື່ ດັ່ງນີ້:

1) ທ່ານ ມອນໄຊ ລາວມົວຊີ້ງ
2) ທ່ານ ພອຍຄຳ ຊົ່ງບຸນຍວງ
3) ທ່ານ ນາງ ຄຳສີ ສິດທິວໍລະດາ
4) ທ່ານ ຄືວຈົ້ງ ດຣາເຊັ້ງ
5) ທ່ານ ນາງ ບຸນທະວີ ສີງວິໄລ
6) ທ່ານ ໄພສີ ຕັນມະແລດ
7) ທ່ານ ຄຳເພັດ ດວງມາລາ

ຄະນະກຳມະການເລືອກຕັ້ງ ນະຄອນຫຼວງ, ແຂວງ, ບັນດາອົງການຈັດຕັ້ງພັກ, ລັດ ແລະ ອົງການຈັດຕັ້ງມະຫາຊົນຂັ້ນສູນກາງ ຈົ່ງຈັດຕັ້ງເຜີຍແຜ່ຂະຫຍາຍຜົນການເລືອກຕັ້ງຄັ້ງນີ້ ໃຫ້ຮັບຮູ້ຢ່າງກວ້າງຂວາງ ແລະ ທົ່ວເຖິງ ນັບແຕ່ມື້ໄດ້ຮັບປະກາດແຈ້ງການສະບັບນີ້ເປັນຕົ້ນໄປ.

ຄະນະກຳມະການເລືອກຕັ້ງລະດັບຊາດ
ປະທານ

ບອ ໄຊສົມພອນ ພົມວິຫານ

7



## ກອງປະຊຸມ...

(ຕໍ່ຈາກໜ້າ 1)

ທ່ານຮອງປະທານຄະນະປະຈຳ ແລະກຳມະການໃນຄະນະປະຈຳສະພາແຫ່ງຊາດ, ກະຊວງ-ອົງການທີ່ກ່ຽວຂ້ອງ, ກົມທີ່ກ່ຽວຂ້ອງ ແລະ ໜ່ວຍງານຮັບຜິດຊອບ ເຂົ້າຮ່ວມຢ່າງພ້ອມພຽງ.

ກອງປະຊຸມໄດ້ພິຈາລະນາບັນຫາສຳຄັນພື້ນຖານຂອງປະເທດຊາດ ຕາມຂອບເຂດສິດ ແລະໜ້າທີ່ຂອງຄະນະປະຈຳສະພາແຫ່ງຊາດ ທີ່ໄດ້ກຳນົດໄວ້ໃນລັດຖະທຳມະນູນ ແລະກົດໝາຍດັ່ງນີ້:

1. ບົດລາຍງານຜົນສຳເລັດວຽກງານພົ້ນເດັ່ນການກະກຽມ ແລະ ດຳເນີນການເລືອກຕັ້ງສະມາຊິກສະພາແຫ່ງຊາດຊຸດທີ X ແລະ ສະພາປະຊາຊົນຂັ້ນແຂວງ ຊຸດທີ V;

2. ບົດລາຍງານການກະກຽມດຳເນີນກອງປະຊຸມຄັ້ງປະຖົມມະລືກຂອງສະພາແຫ່ງຊາດຊຸດທີ X ຕໍ່ກອງປະຊຸມກົມການເມືອງສູນກາງພັກ;

3. ພິຈາລະນາຄຳຮ້ອງຂໍຄວາມເປັນທຳ ສະບັບເລກທີ 307/ສພຊ, ລົງວັນທີ 10 ກັນຍາ 2024 ກ່ຽວກັບຄະດີແພ່ງທວງເອົາທີ່ດິນ ແລະ ເຮືອນ;

4. ພິຈາລະນາສະເໜີການຍ້ອງຍໍໃຫ້ແກ່ຄະນະຮັບຜິດຊອບຂອງສະພາແຫ່ງຊາດລາວ ແລະສະພາແຫ່ງຊາດຫວຽດນາມ ໃນການຂຽນປຶ້ມ 50 ປີ ແຫ່ງການພົວພັນລະຫວ່າງສະພາແຫ່ງຊາດລາວ ແລະ ສະພາແຫ່ງຊາດຫວຽດນາມ: ການຮ່ວມມືຮອບດ້ານ ແລະ ການພັດທະນາ.

5. ພິຈາລະນາວຽກງານສຳຄັນອື່ນຈຳນວນໜຶ່ງ.

ບັນດາຜູ້ເຂົ້າຮ່ວມໄດ້ເອົາໃຈໃສ່ຄົ້ນຄວ້າ, ປະກອບຄຳເຫັນຢ່າງມີຈຸດສຸມ, ກົງໄປກົງມາ ຕໍ່ບັນດາເນື້ອໃນທີ່ນຳມາພິຈາລະນາໃນກອງປະຊຸມຄັ້ງນີ້ເພື່ອຮັບປະກັນການຕົກລົງບັນຫາຢ່າງມີຄວາມເປັນເອກະພາບ, ສາມາດເປັນບ່ອນອີງໃນການຈັດຕັ້ງປະຕິບັດ ແລະ ນຳຜົນປະໂຫຍດລວມມາສູ່ປະເທດຊາດແລະປະຊາຊົນບັນດາເຜົ່າຢ່າງແທ້ຈິງ.

**(ນາງ ສຸພາວັນ ຫອມສະນິດ)**

# ມອບພາຫະນະ ແລະ ອຸປະກອນຮັບໃຊ້ ໃຫ້ຫ້ອງວ່າການ ສພຂ ວຽງຈັນ




(ສພຂ)-ວັນທີ 27 ກຸມພາຜ່ານມາ ທີ່ສະພາປະຊາຊົນແຂວງວຽງຈັນ, ໄດ້ມີພິທີມອບ-ຮັບເຄື່ອງຊ່ວຍເຫຼືອ ເຊິ່ງປະກອບມີ: ລົດຈັກ 12 ຄັນ, ຄອມພິວເຕີ້ 22 ເຄື່ອງ ແລະ ເຄື່ອງປຣິນເຕີ້ 11 ເຄື່ອງ ລວມມູນຄ່າ 733 ລ້ານກ່ວາກີບ; ຕາງໜ້າກ່າວມອບໂດຍທ່ານ ບຸນສອນ ເຜັດລາວັນ ປະທານສະພາປະຊາຊົນແຂວງວຽງຈັນ ແລະ ຕາງໜ້າຮັບໂດຍທ່ານ ຄຳປຽນ ແສງສະຫວັດ ກຳມະການພັກແຂວງ, ເລຂາຄະນະບໍລິຫານພັກເມືອງວັງວຽງ ໂດຍມີບັນດາເລຂາຄະນະບໍລິຫານງານພັກເມືອງ ຈາກ 11 ເມືອງ ເຂົ້າຮ່ວມເປັນສັກຂີພະຍານ.

ທັງນີ້, ກໍເພື່ອນຳໃຊ້ເຂົ້າໃນວຽກງານບໍລິຫານ, ວຽກງານວິຊາສະເພາະ ແລະ ອື່ນໆ ຂອງຫ້ອງວ່າການສະພາປະຊາຊົນແຂວງປະຈຳເຂດເລືອກຕັ້ງເມືອງທົ່ວແຂວງ ໃຫ້ສູງຂຶ້ນແລະມີຄວາມສະດວກ, ວ່ອງໄວ, ຖືກຕ້ອງຊັດເຈນ ແລະ ທ່ວງທັນຕາມເວລາທີ່ກຳນົດໄວ້.

# ຜົນການເລືອກຕັ້ງ ສສຂ ບໍລິຄຳໄຊ



(ສພຂ) ວັນທີ 27 ກຸມພາຜ່ານມາ, ທ່ານ ປອ. ສຸວັນນີ ໄຊຊະນະ ປະທານສະພາປະຊາຊົນແຂວງບໍລິຄຳໄຊ, ຮອງປະທານຄະນະກຳມະການເລືອກຕັ້ງຂັ້ນແຂວງ ໄດ້ຕາງໜ້າຄະນະກຳມະການເລືອກຕັ້ງແຂວງບໍລິຄຳໄຊ ຖະແຫຼງກ່ຽວກັບຜົນການເລືອກຕັ້ງສະມາຊິກສະພາປະຊາຊົນແຂວງ (ສສຂ) ຊຸດທີ V ເຊິ່ງທ່ານໃຫ້ຮູ້ວ່າ: ແຂວງບໍລິຄຳໄຊ ມີພົນລະເມືອງ 328.779 ຄົນ, ຍິງ 158.352 ຄົນ, ມີໜ່ວຍປ່ອນບັດ 208 ໜ່ວຍ, ຜູ້ມີສິດປ່ອນບັດເລືອກຕັ້ງ 215.335 ຄົນ, ຍິງ 106.373 ຄົນ; ມີຜູ້ທີ່ມາໃຊ້ສິດປ່ອນບັດຕົວຈິງ ໃນວັນທີ 22 ກຸມພາຜ່ານມາ 182.860 ຄົນ, ຍິງ 90.147 ຄົນ; ມີຮັບສະໝັກເລືອກຕັ້ງເປັນ ສສຂ 49 ທ່ານ, ຍິງ 13 ທ່ານ; ເລືອກໄດ້ 35 ທ່ານ ຍິງ 8 ທ່ານ ລາຍລະອຽດດັ່ງນີ້:

- **ເຂດເລືອກຕັ້ງເມືອງ ປາກຊັນ:** ມີຜູ້ລົງສະໝັກຮັບເລືອກຕັ້ງ 6 ທ່ານ, ຍິງ 2 ທ່ານ; ເລືອກໄດ້ 4 ທ່ານ, ຍິງ 1 ທ່ານ ດັ່ງນີ້:

1. ທ່ານ ແສງອາລຸນ ແສງອາພອນ ກຳມະການປະຈຳພັກແຂວງ, ເລຂາພັກຄະນະບໍລິຫານງານພັກເມືອງ;
2. ທ່ານ ບຸນມີ ເພັງສະຫວັນ ກຳມະການພັກເມືອງ, ຫົວໜ້າຫ້ອງວ່າການເມືອງ;
3. ທ່ານ ພັທ. ໄຊຍະສຸກ ຫຼຽນຕະກຸນ ເລຂາໜ່ວຍພັກ, ຮອງປະທານຄະນະກຳມະການຍຸຕິທຳແລະປ້ອງກັນຊາດ-ປ້ອງກັນຄວາມສະຫງົບ;
4. ທ່ານ ນາງ ຈຸນລາວັນ ພິລາໄຊພິທັກ ກຳມະການພັກເມືອງ, ປະທານສະຫະພັນແມ່ຍິງເມືອງ;
5. ທ່ານ ທິລະພົງ ຈັນຕາ ຜູ້ກວດກາໜ່ວຍພັກ, ຮອງຫົວໜ້າຫ້ອງວ່າການສະພາປະຊາຊົນແຂວງ.

- **ເຂດເລືອກຕັ້ງເມືອງ ທ່າພະບາດ:** ມີຜູ້ລົງສະໝັກຮັບເລືອກຕັ້ງ 7 ທ່ານ, ຍິງ 3 ທ່ານ; ເລືອກໄດ້ 5 ທ່ານ, ຍິງ 2 ທ່ານ ດັ່ງນີ້:

1. ທ່ານ ອຸດອນ ສອນສຸລິນ ກຳມະການປະຈຳພັກແຂວງ, ເລຂາພັກຄະນະບໍລິຫານງານພັກເມືອງ;
2. ທ່ານ ບຸດສະດີ ແສງມະນີວົງ ກຳມະການພັກເມືອງ, ຜູ້ຊ່ວຍວຽກສະພາ;
3. ທ່ານ ນາງ ສຸດທິສານ ທອງພັນ ຮອງເລຂາໜ່ວຍພັກ, ຮອງຫົວໜ້າຫ້ອງວ່າການເມືອງ;
4. ທ່ານ ສະພັງທອງ ພົມມະຈັກຮອງເລຂາໜ່ວຍພັກ, ຮອງປະທານຄະນະກຳມະການຍຸຕິທຳແລະປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ຮອງພະແນກຍຸຕິທຳແຂວງ
5. ທ່ານ ນາງ ສຸພີ ຫຼວງຜ່ານ ຮອງເລຂາ ແລະ ຜູ້ກວດກາ, ຮອງຫົວໜ້າຄະນະໂຄສະນາອົບຮົມເມືອງ.

- **ເຂດເລືອກຕັ້ງເມືອງ ບໍລິຄັນ:** ມີຜູ້ລົງສະໝັກຮັບເລືອກຕັ້ງ 7 ທ່ານ, ຍິງ 1 ທ່ານ, ໄດ້ຮັບເລືອກ 5 ທ່ານ, ຍິງ 1 ທ່ານ:

1. ທ່ານ ສົມໃຈ ແກ້ວສຸວັນກຳມະການປະຈຳພັກແຂວງ, ເລຂາພັກຄະນະບໍລິຫານງານພັກເມືອງ;
2. ທ່ານ ແສງສະໄໝ ພະໄຊວໍລະວົງ ກຳມະການພັກ

ອ່ານຕໍ່ໜ້າ 12

# ປະກາດລາຍຊື່ຜູ້ໄດ້ຮັບເລືອກຕັ້ງເປັນ ສສຂ ສາລະວັນ




(ສພຂ)-ວັນທີ 27 ກຸມພາຜ່ານມາ, ທ່ານ ສີເຮັງ ຫອມສົມບັດປະທານສະພາປະຊາຊົນແຂວງ, ຮອງປະທານຜູ້ປະຈຳການຄະນະກຳມະການເລືອກຕັ້ງແຂວງສາລະວັນ ໄດ້ປະກາດລາຍຊື່ຜູ້ໄດ້ຮັບເລືອກຕັ້ງເປັນສະມາຊິກສະພາປະຊາຊົນແຂວງສາລະວັນ ຊຸດທີ V ຕໍ່ສື່ມວນຊົນ ໂດຍທ່ານໃຫ້ຮູ້ວ່າ: ທົ່ວແຂວງມີ 362 ໜ່ວຍປ່ອນບັດ, ມີພົນລະເມືອງຜູ້ມີສິດປ່ອນບັດເລືອກຕັ້ງ 229,642 ຄົນ, ຍິງ 114,606 ຄົນ ແລະ ມີໜ້າມາໃຊ້ສິດຕົວຈິງມື້ເລືອກຕັ້ງ 232,038 ຄົນ (ເພີ່ມຂຶ້ນ 2,396 ຄົນ ) ເຊິ່ງສາມາດເລືອກໄດ້ສະມາຊິກສະພາປະຊາຊົນແຂວງສາລະວັນ ຊຸດທີ V ໄດ້ 40 ທ່ານ ດັ່ງນີ້:

- **ເຂດເລືອກຕັ້ງເມືອງ ສາລະວັນ ມີ 05 ທ່ານ, ຍິງ 02 ທ່ານ.**

1. ທ່ານ ປອ ສະໄໝ ໂພທິສານ
2. ທ່ານ ອ້ອມ ໄຊຍະວົງສາ
3. ທ່ານ ວຽງໄຊ ແກ້ວມະນີວົງ
4. ທ່ານ ນາງ ບຸນຖົມ ແກ້ວມາລາ
5. ທ່ານ ນາງ ວົງຈັນ ພັນທະວົງ

- **ເຂດເລືອກຕັ້ງເມືອງ ເລົ່າງາມ ມີ 05 ທ່ານ, ຍິງ 03 ທ່ານ.**

1. ທ່ານ ໂພສີ ຫຼວງສຸລິວັນ
2. ທ່ານ ນາງ ຄຳຫຼ້າ ໂພທິເສນ
3. ທ່ານ ນາງ ອາລຸນນີ ອາດວິໄລ
4. ທ່ານ ປອ ສຸພະໄຊ ບຸນຍົງ
5. ທ່ານ ນາງ ວຽງໄຊ ແກ້ວວິໄລວົງ

- **ເຂດເລືອກຕັ້ງເມືອງ ວາປີ ມີ 05 ທ່ານ, ຍິງ 02 ທ່ານ.**

1. ທ່ານ ບຸນຍູ້ ຈັນທະລັງສີ
2. ທ່ານ ເພັດສຳລີ ເຂັມວິໄລ
3. ທ່ານ ບຸນທະວີ ພົມມະສານ
4. ທ່ານ ນາງ ແກ້ວທະວີ ຈິດປະສົງ
5. ທ່ານ ນາງ ວິໄລພອນ ໄຊຍະເສນ

- **ເຂດເລືອກຕັ້ງເມືອງ ຄົງເຊໂດນມີ 05 ທ່ານ, ຍິງ 01 ທ່ານ.**

1. ທ່ານ ວິໄລ ສີລາດວງໃຈ
2. ທ່ານ ພູມີ ມຸ້ງສິນ
3. ທ່ານ ບຸນໂຮມ ບົວວິໄລ
4. ທ່ານ ນາງ ປະທຸມພອນ ຈັນທະລັງສີ
5. ທ່ານ ພັທ. ທຸມພັນ ທັກຂິນ

- ເຂດເລືອກຕັ້ງເມືອງ ລະຄອນເພັງ ມີ 05 ທ່ານ, ຍິງ 01 ທ່ານ.

1. ທ່ານ ເວີນມະນີ ມຸ່ງສີວົງສາ
2. ທ່ານ ສູນທອນ ເກດສົມ
3. ທ່ານ ຈິດຕະກອນ ສາຍສະໝຸດ
4. ທ່ານ ນາງ ສຸກສະດາ ວົງວິໄລ
5. ທ່ານ ສຸກສະຫວັດ ພົມບຸນຍໍ

- **ເຂດເລືອກຕັ້ງເມືອງ ຕຸ້ມລານ ມີ 05 ທ່ານ, ຍິງ 02 ທ່ານ.**

1. ທ່ານ ບົວແກ້ວ ວົງຄຳຈັນ
2. ທ່ານ ເດດແກ້ວ ຄຸນຍອດປັນຍາ
3. ທ່ານ ບົວທອງ ບຸນທິສານ
4. ທ່ານ ນາງ ສຸກສະຫວັນ ເນົາວະລັດ
5. ທ່ານ ນາງ ຂັນຄຳ ລີເດດມູນສອນ

- **ເຂດເລືອກຕັ້ງເມືອງ ຕະໂອ້ຍ ມີ 05 ທ່ານ, ຍິງ 02 ທ່ານ.**

1. ທ່ານ ຄຳສະໃຫວ ວິລະກອນ
2. ທ່ານ ຈັນທະວິສຸກ ສູນທອນມະນີວົງ
3. ທ່ານ ສະນັ່ນ ພົມພິສານ
4. ທ່ານ ພູນອນ ໄກຍະລາດ
5. ທ່ານ ນາງ ດວງພະຈັນ ພົມມີໄຊ

- **ເຂດເລືອກຕັ້ງເມືອງ ສະໝ້ວຍ ມີ 05 ທ່ານ, ຍິງ 02 ທ່ານ.**

1. ທ່ານ ບຸນເນື້ອ ຫຼອງຄຳໄຕ
2. ທ່ານ ພອນໄຊ ຂຸນສອນສະຫວັດ
3. ທ່ານ ພັຕ. ນາງ ແຍງສີ ພູມີສິດ
4. ທ່ານ ໄພວັນ ແສງອຳພັນ
5. ທ່ານ ນາງ ສຸນາລີ ໄຊສົມໂພດ.



# ຜົນການເລືອກຕັ້ງ ສສຂ ຈຳປາສັກ



(ສພຂ) - ວັນທີ 27 ກຸມພາຜ່ານມາ, ທ່ານ ແກ້ວລັດຕະນະ ສີຫາວົງ ຮອງປະທານຄະນະປະຈຳການ, ຄະນະກຳມະການເລືອກຕັ້ງຂັ້ນແຂວງ ໄດ້ຖະແຫຼງຜົນສຳເລັດການເລືອກຕັ້ງສະມາຊິກສະພາປະຊາຊົນ ແຂວງຈຳປາສັກ ຊຸດທີ V ເຊິ່ງທ່ານໃຫ້ຮູ້ວ່າ: ທົ່ວແຂວງມີ 615 ໜ່ວຍບ່ອນບັດ, ມີຜູ້ມາໃຊ້ສິດປ່ອນບັດຕົວຈິງ 380,835 ຄົນ, ຍິງ 181,958 ຄົນ; ມີຜູ້ສະໝັກເລືອກຕັ້ງເປັນສະມາຊິກສະພາປະຊາຊົນແຂວງຈຳປາສັກ 70 ທ່ານ, ຍິງ 20 ທ່ານ; ສາມາດເລືອກ 50 ທ່ານ, ຍິງ 13 ທ່ານ ດັ່ງນີ້:

**- ນະຄອນປາກເຊ ຈຳນວນ 5 ທ່ານ, ຍິງ 1 ທ່ານ ຄື:**

1. ທ່ານ ປອ. ວັນນະໄຊ ຊາດຕະກຸນ ກຳມະການສູນກາງພັກ, ຄະນະປະຈຳພັກ, ເລຂາຄະນະບໍລິຫານພັກນະຄອນ;
2. ທ່ານ ໄກສອນ ລາດຊະວົງ ຮອງປະທານຄະນະກຳມະການເສດຖະກິດ, ແຜນການ ແລະ ການເງິນ ສະພາປະຊາຊົນແຂວງ;
3. ທ່ານ ປອ. ປາດຖະໜາ ພອນທິບ ຮອງຫົວໜ້າພະແນກໂຍທາທິການແລະຂົນສົ່ງ;
4. ທ່ານ ນາງ ແສງເດືອນ ສີຫາວົງກຳມະການພັກນະຄອນ, ປະທານສະຫະພັນແມ່ຍິງນະຄອນ;
5. ທ່ານ ສັນຕິສຸກ ອໍແກ້ວເຕໄຊ ກຳມະການພັກນະຄອນ, ຫົວໜ້າຫ້ອງການອຸດສາຫະກຳ ແລະ ການຄ້າ.

**- ເມືອງຊະນະສົມບູນ ຈຳນວນ 5 ທ່ານ, ຍິງ 1 ທ່ານ ຄື:**

1. ທ່ານ ຄຳສີ ຫຼີນສະຫວາດ ກຳມະການພັກແຂວງ, ເລຂາຄະນະບໍລິຫານງານພັກເມືອງ;
2. ທ່ານ ນາງ ໄຊຍະລິດ ວົງສາລະວັນ ກຳມະການພັກແຂວງ, ຮອງຫົວໜ້າຫ້ອງວ່າການສະພາປະຊາຊົນແຂວງ;
3. ທ່ານ ສຳລານ ອ່ອນໄຊວົງ ຮອງເລຂາພັກເມືອງ, ປະທານກວດກາພັກ-ລັດເມືອງ;
4. ທ່ານ ຄຳສະໄຫວ ຂຳມະວົງກຳມະການພັກເມືອງ, ເລຂາຄະນະພັກຮາກຖານ ກຸ່ມIII;
5. ທ່ານ ສິດທິໄຊ ວິໄລສານຮອງເລຂາໜ່ວຍພັກ, ຮອງຫົວໜ້າພະແນກຍຸຕິທຳແຂວງ;

**- ເມືອງບາຈຽງຈະເລີນສຸກ ຈຳນວນ 5 ທ່ານ, ຍິງ 1 ທ່ານ ຄື:**

1. ທ່ານ ປອ ອຳນວຍ ເຮືອງວົງສາ ກຳມະການພັກແຂວງ, ເລຂາຄະນະບໍລິຫານງານພັກເມືອງ;
2. ທ່ານ ນາງ ພັດຊະລີ ພົດຈະນະກິດ ຮອງປະທານຄະນະກຳມະການວັດທະນະທຳ-ສັງຄົມ ແລະ ບັນດາເຜົ່າ ສະພາປະຊາຊົນແຂວງ;
3. ທ່ານ ຄຳໄພ ຂັນທະລີໄຊກຳມະການພັກເມືອງ, ຫົວໜ້າຫ້ອງວ່າການເມືອງ;
4. ທ່ານ ຄອນສະຫວັນ ວົງພະຈັນ ຮອງເລຂາໜ່ວຍພັກ, ຫົວໜ້າອົງການກວດສອບງົບປະມານ ອົງການກວດສອບແຫ່ງລັດ ປະຈຳພາກໃຕ້;
5. ທ່ານ ພັທ. ທະວີໄຊ ອາໄລຮັກກຳມະການພັກເມືອງ, ຫົວໜ້າກອງບັນຊາການປ້ອງກັນຄວາມສະຫງົບເມືອງ.

**- ເມືອງປາກຊ່ອງ ຈຳນວນ 5 ທ່ານ, ຍິງ 2 ທ່ານ ຄື:**

1. ທ່ານ ບຸນລິດ ເທບບຸນສູງ ກຳມະການພັກແຂວງ, ເລຂາຄະນະບໍລິຫານງານພັກເມືອງ;
2. ທ່ານ ຄຳ ນິລະວົງ ກຳມະການພັກແຂວງ, ຫົວໜ້າພະແນກກະສິກຳ ແລະ ສິ່ງແວດລ້ອມແຂວງ;
3. ທ່ານ ນາງ ບຸນເຮືອງ ແຄຣ໌ລິດດັງ ເລຂາໜ່ວຍພັກ, ປະທານສະພາອຸດສາຫະກຳແລະການຄ້າ;
4. ທ່ານ ນາງ ດວງວັນດອນ ໄຊຍະລາດ ກຳມະການພັກເມືອງ, ປະທານສະຫະພັນແມ່ຍິງເມືອງ;
5. ທ່ານ ດາວຊອນ ມະນີໄຊ ກຳມະການພັກເມືອງ, ປະທານກຳມະບານເມືອງ.

**- ເມືອງປະທຸມພອນ ຈຳນວນ 5 ທ່ານ, ຍິງ 1 ທ່ານ ຄື:**

1. ທ່ານ ສົມຈິດ ແພງສະຫວັດ ກຳມະການພັກແຂວງ, ເລຂາຄະນະບໍລິຫານງານພັກເມືອງ;
2. ທ່ານ ວັນດີ ອັກຄະວົງ ກຳມະການພັກເມືອງ, ຮອງປະທານກວດກາພັກ-ລັດເມືອງ;
3. ທ່ານ ນາງ ສຸກກັນຍາ ທຳມະນູນ ຫົວໜ້າຂະແໜງເສດຖະກິດ ສະພາປະຊາຊົນແຂວງ;
4. ທ່ານ ສີສຸກ ວົງພັກດີ ກຳມະການແນວລາວສ້າງຊາດ, ຄະນະປະຈຳສະພາອຸດສາຫະກຳ ແລະ ການຄ້າ, ປະທານບໍລິສັດເຜີດສະຫວ່າງ ຮ່ວມພັດທະນາກາເຟ;
5. ທ່ານ ພັທ. ຄຳຕັນ ສຸວັນນະໄກສອນ ຮອງເລຂາຄະນະພັກຮາກຖານ, ຫົວໜ້າການທະຫານກອງບັນຊາການທະຫານເມືອງ.

**- ເມືອງໂພນທອງ ຈຳນວນ 5 ທ່ານ, ຍິງ 1 ທ່ານ ຄື:**

1. ທ່ານ ບຸນທັນ ໄຊຍະແສງ ກຳມະການພັກແຂວງ, ເລຂາຄະນະບໍລິຫານງານພັກເມືອງ;
2. ທ່ານ ປອ. ໄຊຍະເພັດຊາພິຈິດຮອງຫົວໜ້າຫ້ອງວ່າການສະພາປະຊາຊົນແຂວງ;
3. ທ່ານ ພັອ. ສີຜາ ຊຸນພົນພັກດີຄະນະປະຈຳພັກ, ຮອງຫົວໜ້າກອງບັນຊາການປ້ອງກັນຄວາມສະຫງົບ;
4. ທ່ານ ພັທ. ຈັນໄທ ຊົມພູ ຄະນະປະຈຳພັກເມືອງ, ຫົວໜ້າການເມືອງກອງບັນຊາການທະຫານເມືອງ;
5. ທ່ານ ນາງ ຄຳດີ ນິຍົມຄຳ ກຳມະການພັກເມືອງ, ປະທານສະຫະພັນແມ່ຍິງເມືອງ.

**- ເມືອງຈຳປາສັກ ຈຳນວນ 5 ທ່ານ, ຍິງ 2 ທ່ານ ຄື:**

1. ທ່ານ ວິໄລສັກ ສູນທອນກຳມະການພັກແຂວງ, ເລຂາຄະນະບໍລິຫານງານພັກເມືອງ;
2. ທ່ານ ນາງ ບົວລຽນ ມະນີວົງ ກຳມະການພັກແຂວງ, ຫົວໜ້າອົງການໄອຍະການປະຊາຊົນແຂວງ;
3. ທ່ານ ຈິດສະໝອນ ບຸດຕີວົງ ຮອງເລຂາໜ່ວຍພັກ, ຮອງປະທານຄະນະກວດກາພັກ, ຮອງປະທານອົງການກວດກາລັດແຂວງ;

ອ່ານຕໍ່ໜ້າ 9

# ປະກາດລາຍຊື່ຜູ້ໄດ້ຮັບເລືອກຕັ້ງເປັນ ສສຂ ເຊກອງ



(ສພຂ) - ວັນທີ 27 ມີນາຜ່ານມາ, ທ່ານ ວົງເດືອນ ຈັນທະບຸດຊຽງ ຫົວໜ້າຄະນະຈັດຕັ້ງແຂວງ, ຄະນະກຳມະການເລືອກຕັ້ງຂັ້ນແຂວງ, ຫົວໜ້າອະນຸກຳມະການໂຄງປະກອບ ແລະ ບຸກຄະລາກອນ ຄະນະກຳມະການເລືອກຕັ້ງແຂວງເຊກອງ ໄດ້ຕາງໜ້າໃຫ້ຄະນະກຳມະການເລືອກຕັ້ງຂັ້ນແຂວງ ປະກາດລາຍຊື່ຜູ້ໄດ້ຮັບການເລືອກຕັ້ງເປັນສະມາຊິກສະພາປະຊາຊົນຂັ້ນແຂວງ ຊຸດທີ V ເຊິ່ງທ່ານໃຫ້ຮູ້ວ່າ: ມີ 25 ທ່ານ, ຍິງ 07 ທ່ານ ລາຍລະອຽດມີດັ່ງນີ້:

**- ເຂດເລືອກຕັ້ງເມືອງລະມາມ ມີ 07 ທ່ານ, ຍິງ 02 ທ່ານ ຄື:**

1. ທ່ານ ດາວວີ ສວຍທະລັງສີ ກຳມະການພັກແຂວງ, ເລຂາຄະນະບໍລິຫານພັກເມືອງ;
2. ທ່ານ ພັທ. ດາສີສາຍ ວິໄລສັກ ຮອງປະທານຄະນະກຳມະການຍຸຕິທຳ ແລະ ປ້ອງກັນ ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ;
3. ທ່ານ ນາງ ແກ້ວວອນ ເດດສະຫວັນ ຮອງຫົວໜ້າຫ້ອງການການເງິນເມືອງ;
4. ທ່ານ ແສງດາວອນ ສຸພອນມະໄລ ກຳມະການພັກເມືອງ;
5. ທ່ານ ອຳໄພວັນ ຊະນິພົນ ຮອງຫົວໜ້າຫ້ອງວ່າການແຂວງ;
6. ທ່ານ ສຸກສາຄອນ ກົມມະດຳຮອງຫົວໜ້າຂະແໜງນິຕິກຳ ແລະ ຍຸຕິທຳ ສະພາປະຊາຊົນແຂວງ;
7. ທ່ານ ນາງ ລັດສະໝີ ສຸດທິຈັກ ຫົວໜ້າຂະແໜງພັດທະນາແມ່ຍິງ ສະຫະພັນແມ່ຍິງແຂວງ;

**- ເຂດເລືອກຕັ້ງເມືອງທ່າແຕງ ມີ 06 ທ່ານ, ຍິງ 01 ທ່ານ ຄື:**

1. ທ່ານ ບຸນເລີຍ ນັນທະວົງ ກຳມະການພັກແຂວງ, ເລຂາຄະນະບໍລິຫານພັກເມືອງ;
2. ທ່ານ ສຸພົນ ໄຊສະຫງ່າ ກຳມະການພັກແຂວງ;
3. ທ່ານ ສິງດຳ ຄິວລະວົງ ກຳມະການພັກເມືອງ ປະທານສະຫະພັນກຳມະບານເມືອງ;
4. ທ່ານ ພູວົງ ກອງຊັບ ກຳມະການພັກເມືອງ, ຫົວໜ້າຫ້ອງການສະມາຊິກສະພາປະຊາຊົນແຂວງ ປະຈຳເຂດເລືອກຕັ້ງເມືອງ;
5. ທ່ານ ພົງສາລີ ສີສຸພັນ ຮອງຫົວໜ້າຫ້ອງວ່າການສະພາປະຊາຊົນແຂວງ;
6. ທ່ານ ນາງ ດາລາພອນ ວັນນະແສງ ຮອງປະທານສະຫະພັນແມ່ຍິງເມືອງ.

**- ເຂດເລືອກຕັ້ງເມືອງດາກຈຶງ ມີ 06 ທ່ານ, ຍິງ 02 ທ່ານ ຄື:**

1. ທ່ານ ເພັງນາ ຈັນທະພອນກຳມະການພັກແຂວງ, ເລຂາຄະນະບໍລິຫານພັກເມືອງ;
2. ທ່ານ ນາງ ລັດດາ ວຽງພັນທະນາໄລ ຮອງປະທານຄະນະກຳມະການວັດທະນະທຳ-ສັງຄົມ ແລະ ບັນດາເຜົ່າ ສະພາປະຊາຊົນແຂວງ;
3. ທ່ານ ນາງ ສາຍໃຈ ບຸດດາກັງ ກຳມະການພັກເມືອງ, ເລຂາຄະນະບໍລິຫານງານຊາວໜຸ່ມເມືອງ;
4. ທ່ານ ແກ້ວໄຊ ອິນທະໜອມ ກຳມະການພັກເມືອງ, ຮອງປະທານກວດກາພັກ-ລັດເມືອງ;
5. ທ່ານ ແສງພູມາ ເຮີນມີໄຊ ຫົວໜ້າຂະແໜງບໍລິຫານ ແລະ ການເງິນ ສະພາປະຊາຊົນແຂວງ;
6. ທ່ານ ນ. ອາລີກອນ ໄຊມູນຄຳ ຮອງຫົວໜ້າພະແນກສຶກສາທິການ ແລະ ກິລາ.

**- ເຂດເລືອກຕັ້ງເມືອງກະລຶມ ມີ 06 ທ່ານ, ຍິງ 02 ທ່ານ ຄື:**

1. ທ່ານ ສາຍຄຳ ແກ້ວບຸນປານກຳມະການພັກແຂວງ, ເລຂາຄະນະບໍລິຫານພັກເມືອງ;
2. ທ່ານແສງລາຕີ ຫຼວມຍະເດດ ກຳມະການພັກແຂວງ, ຫົວໜ້າໂຮງຮຽນທິດສະດີການເມືອງ-ການປົກຄອງແຂວງ;
3. ທ່ານ ສີທາ ສຸວັນນະສິນ ກຳມະການພັກເມືອງ;
4. ທ່ານ ສີໄຄ້ ລຽງສະຫວັດ ຮອງຫົວໜ້າພະແນກການເງິນແຂວງ;
5. ທ່ານ ນາງ ສົມພານ ສຸລິຍະລັງສີ ຫົວໜ້າຫ້ອງການການແດງເມືອງ;
6. ທ່ານ ອິນໂດ ພົມມະຈັນ ຮອງຫົວໜ້າຫ້ອງການວັດທະນະທຳ ແລະ ການທ່ອງທ່ຽວເມືອງ.






# ການປະກາດລາຍຊື່ ແລະ ການສະເໜີຄັດຄ້ານ

# ທິດດີ

ເພື່ອນຜູ້ອ່ານໄດ້ສະເໜີມາວ່າ ຢາກຮູ້ກ່ຽວກັບຜູ້ສະໝັກຮັບເລືອກຕັ້ງ ໂດຍສະເພາະການປະກາດລາຍຊື່, ການສະເໜີຄັດຄ້ານຜູ້ສະໝັກຮັບເລືອກຕັ້ງ ເປັນແນວໃດ?

ມື້ນີ້, ຜູ້ຂຽນຂໍນຳສະເໜີຕາມເອກະສານຖາມ-ຕອບ ກ່ຽວກັບການເລືອກຕັ້ງຄັ້ງວັນທີ 22 ກຸມພາ 2026 ດັ່ງນີ້:

ການກຳນົດຈຳນວນຜູ້ສະໝັກຮັບເລືອກຕັ້ງເປັນສະມາຊິກສະພາ, ສະເໜີລາຍຊື່ ແລະ ການປະກາດລາຍຊື່ຜູ້ສະໝັກຮັບເລືອກຕັ້ງ ມີດັ່ງນີ້:

1. ຄະນະປະຈຳສະພາແຫ່ງຊາດ ເປັນຜູ້ກຳນົດຈຳນວນຜູ້ສະໝັກຮັບເລືອກຕັ້ງເປັນສະມາຊິກສະພາແຫ່ງຊາດ ແລະ ສະມາຊິກສະພາປະຊາຊົນຂັ້ນແຂວງ ໂດຍແມ່ນປະທານປະເທດເປັນຜູ້ອອກລັດຖະດຳລັດປະກາດເປັນທາງການຢ່າງຊ້າສີ່ສິບຫ້າວັນ ກ່ອນການເລືອກຕັ້ງ.

2. ການສະເໜີລາຍຊື່ຂອງຜູ້ສະໝັກຮັບເລືອກຕັ້ງເປັນສະມາຊິກສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ແມ່ນອົງການຈັດຕັ້ງຂອງພັກ, ລັດ, ແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າລາວ ແລະ ອົງການຈັດຕັ້ງມະຫາຊົນ ເປັນຜູ້ມີສິດຄົ້ນຄວ້າ, ທາບທາມ ແລະ ສະເໜີລາຍຊື່ຜູ້ຕາງໜ້າອົງການຂອງຕົນ ອອກສະໝັກຮັບເລືອກຕັ້ງເປັນສະມາຊິກສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ.

- ສຳລັບລາຍຊື່ຜູ້ສະໝັກຮັບເລືອກຕັ້ງເປັນສະມາຊິກສະພາແຫ່ງຊາດຈາກຂະແໜງການ ແລະ ອົງການຈັດຕັ້ງຂັ້ນສູນກາງນັ້ນ ໃຫ້ສະເໜີຕໍ່ຄະນະກຳມະການເລືອກຕັ້ງລະດັບຊາດເປັນຜູ້ພິຈາລະນາຕົກລົງ.

- ສຳລັບລາຍຊື່ຜູ້ສະໝັກຮັບເລືອກຕັ້ງເປັນສະມາຊິກສະພາແຫ່ງຊາດຈາກທ້ອງຖິ່ນ ໃຫ້ສະເໜີຕໍ່ຄະນະກຳມະການເລືອກຕັ້ງຂັ້ນແຂວງ ແລ້ວນຳສະເໜີໃຫ້ຄະນະກຳມະການເລືອກຕັ້ງລະດັບຊາດ ເປັນພິຈາລະນາຕົກລົງ.

- ສຳລັບລາຍຊື່ຜູ້ສະໝັກຮັບເລືອກຕັ້ງເປັນສະມາຊິກສະພາປະຊາຊົນຂັ້ນແຂວງ ໃຫ້ສະເໜີຕໍ່ຄະນະກຳມະການເລືອກຕັ້ງຂັ້ນເມືອງ ແລະນຳສະເໜີໃຫ້ຄະນະກຳມະການເລືອກຕັ້ງຂັ້ນແຂວງ ແລ້ວນຳສະເໜີໃຫ້ຄະນະກຳມະການເລືອກຕັ້ງລະດັບຊາດ ເປັນຜູ້ພິຈາລະນາຕົກລົງ.

- ສຳລັບລາຍຊື່ຜູ້ສະໝັກຮັບເລືອກຕັ້ງເປັນສະມາຊິກສະພາປະຊາຊົນຂັ້ນແຂວງຈາກຂະແໜງການ ແລະ ອົງການຈັດຕັ້ງຂັ້ນແຂວງ ໃຫ້ສະເໜີຕໍ່ຄະນະກຳມະການເລືອກຕັ້ງຂັ້ນແຂວງ ແລ້ວນຳສະເໜີໃຫ້ຄະນະກຳມະການເລືອກຕັ້ງລະດັບຊາດ ເປັນຜູ້ພິຈາລະນາຕົກລົງ.

3. ການຈັດລຽງເລກລຳດັບລາຍຊື່ຂອງຜູ້ສະໝັກຮັບເລືອກຕັ້ງໃນແຕ່ລະເຂດເລືອກຕັ້ງ ຈະດຳເນີນຕາມຕົວອັກສອນລາວ ຫຼື ດ້ວຍວິທີອື່ນກໍໄດ້ ຕາມການຕົກລົງຂອງຄະນະກຳມະການເລືອກຕັ້ງລະດັບຊາດ.

4. ການປະກາດລາຍຊື່ຜູ້ສະໝັກຮັບເລືອກຕັ້ງມີຄື: ຄະນະກຳມະການເລືອກຕັ້ງລະດັບຊາດເປັນຜູ້ສັງລວມບັນຊີລາຍຊື່ຜູ້ສະໝັກຮັບເລືອກຕັ້ງເປັນສະມາຊິກສະພາແຫ່ງຊາດ ແລະ ສະມາຊິກສະພາປະຊາຊົນຂັ້ນແຂວງ ໃນທົ່ວປະເທດ ແລ້ວປະກາດເປັນທາງການພາຍໃນສີ່ສິບຫ້າວັນ ກ່ອນວັນເລືອກຕັ້ງ.

ການຄັດຄ້ານຜູ້ສະໝັກຮັບເລືອກຕັ້ງມີແນວໃດ?

ຜູ້ມີສິດປ່ອນບັດເລືອກຕັ້ງ ມີສິດຄັດຄ້ານຜູ້ສະໝັກຮັບເລືອກຕັ້ງໃນເຂດເລືອກຕັ້ງຂອງຕົນ ທີ່ຕົນເຫັນວ່າບໍ່ມີມາດຕະຖານຄົບຖ້ວນ ຫຼື ມີການກະທຳເຊິ່ງເປັນການລະເມີດກົດໝາຍ, ລະບຽບການ ແລະ ແຕະຕ້ອງເຖິງສິດຜົນປະໂຫຍດຂອງປະຊາຊົນ ໂດຍມີຂໍ້ມູນຫຼັກຖານທີ່ເຊື່ອຖືໄດ້ຢ່າງເປັນລາຍລັກອັກສອນ ພາຍໃນກຳນົດເຈັດວັນ ນັບແຕ່ວັນປະກາດລາຍຊື່ຜູ້ສະໝັກຮັບເລືອກຕັ້ງເປັນຕົ້ນໄປ.

ການຄັດຄ້ານນັ້ນ ໃຫ້ເຮັດເປັນລາຍລັກອັກສອນ ແລ້ວຍື່ນຕໍ່ຄະນະກຳມະການເລືອກຕັ້ງຂັ້ນເມືອງ ເພື່ອລາຍງານໃຫ້ຄະນະກຳມະການເລືອກຕັ້ງຂັ້ນແຂວງ ພິຈາລະນາແກ້ໄຂພາຍໃນກຳນົດສາມວັນ, ໃນກໍລະນີທີ່ບໍ່ສາມາດແກ້ໄຂໄດ້ນັ້ນ ຕ້ອງຮີບຮ້ອນສົ່ງໃຫ້ຄະນະກຳມະການເລືອກຕັ້ງລະດັບຊາດ ພິຈາລະນາແກ້ໄຂພາຍໃນກຳນົດຫ້າວັນ ນັບແຕ່ວັນໄດ້ຮັບຄຳຄັດຄ້ານເປັນຕົ້ນໄປ.

ຜູ້ຄັດຄ້ານ ຕ້ອງຮັບຜິດຊອບຕໍ່ຄຳຄັດຄ້ານຂອງຕົນ ຕາມກົດໝາຍ ແລະ ລະບຽບການ.

ຂ້າງເທິງນັ້ນ ຄືບາງຂໍ້ມູນທີ່ຢາກສະເໜີໃຫ້ເພື່ອນຜູ້ອ່ານຮັບຊາບນໍ.

## ຜົນກອງປະຊຸມ...

(ຕໍ່ຈາກໜ້າ 1)

ສາມັນຂອງລັດຖະບານ ປະຈຳເດືອນມັງກອນ-ກຸມພາ 2026 ເຊິ່ງທ່ານໃຫ້ຮູ້ວ່າ: ກອງປະຊຸມດັ່ງກ່າວ ໄດ້ໄຂຂຶ້ນໃນຕອນເຊົ້າວັນທີ 24 ແລະ ອັດລົງໃນຕອນບ່າຍວັນທີ 25 ກຸມພາ ທີ່ ສນຍ ພາຍໃຕ້ການເປັນປະທານຂອງທ່ານ ສອນໄຊ ສີພັນດອນ ນາຍົກລັດຖະມົນຕີ; ມີບັນດາທ່ານຮອງນາຍົກລັດຖະມົນຕີ, ສະມາຊິກລັດຖະບານ ແລະ ຜູ້ຕາງໜ້າກະຊວງ-ອົງການ ເຂົ້າຮ່ວມຢ່າງພ້ອມພຽງ.

ກອງປະຊຸມຄັ້ງນີ້ ໄດ້ພ້ອມກັນຄົ້ນຄວ້າ, ປຶກສາຫາລື, ປະກອບຄຳເຫັນ ແລະ ພິຈາລະນາເຫັນດີດ້ານຫຼັກການ ຮັບຮອງເອົາບັນດາຫົວຂໍ້ສຳຄັນດັ່ງນີ້:

ວາລະທີ 1: ວຽກງານຈຸດສຸມຮີບດ່ວນ ຄື:

1)ຮ່າງເນື້ອໃນບົດເຜີຍແຜ່ຂອງນາຍົກລັດຖະມົນຕີ ກ່ຽວກັບແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ X (2026-2030);

2) ຄວາມຄືບໜ້າໃນການແກ້ໄຂຜົນກະທົບດິນຍຸບຢູ່ເຂດບ້ານທົ່ງມັ່ງ ເມືອງໄຊທານີ ນະຄອນຫຼວງວຽງຈັນ;

3) ສະພາບນັກທ່ອງທ່ຽວຢູ່ລາວ ໃນປີ 2025 ແລະ ສະເໜີທິດທາງສົ່ງເສີມການທ່ອງທ່ຽວໃນຕໍ່ໜ້າ.

ໃນນັ້ນ: ກອງປະຊຸມໄດ້ຊີ້ນຳຂະແໜງການກ່ຽວຂ້ອງປັບປຸງຕາມຄຳເຫັນຂອງສະມາຊິກລັດຖະບານ ເພື່ອໃຫ້ມີເນື້ອໃນຄົບຖ້ວນສົມບູນ, ສອດຄ່ອງກັບເງື່ອນໄຂທ່າແຮງຕົວຈິງຂອງປະເທດເຮົາ ບົນຈິດໃຈ ແລະ ຄາດໝາຍໃຫຍ່ ທີ່ໄດ້ກຳນົດໄວ້ໃນມະຕິກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດ ຄັ້ງທີ XII ຂອງພັກ ໂດຍສະເພາະແຜນພັດທະນາບໍ່ແຮ່ ແລະ ແຜນພັດທະນາການທ່ອງທ່ຽວລາວ ໃນຕໍ່ໜ້າ.

ວາລະທີ 2: ກອງປະຊຸມເຫັນດີດ້ານຫຼັກການ ຮັບຮອງເອົາຮ່າງນິຕິກຳ ຈຳນວນ 4 ສະບັບ ຄື:

1) ນະໂຍບາຍການນຳໃຊ້ລົດໄຟຟ້າຢູ່ ສປປລາວ;

2)ຍຸດທະສາດການພັດທະນາເສດຖະກິດ-ສັງຄົມ 10 ປີ (2026-2035) ແລະ ວິໄສທັດຮອດປີ 2055 ຂອງ ສປປ ລາວ;

3) ຮ່າງດຳລັດວ່າດ້ວຍການຂົນສົ່ງສິນຄ້າອັນຕະລາຍທາງບົກ ແລະ ທາງລົດໄຟ;

4) ຮ່າງດຳລັດວ່າດ້ວຍອົງການຈັດຕັ້ງສາກົນທີ່ບໍ່ສັງກັດລັດຖະບານ.

ໃນນັ້ນ, ກອງປະຊຸມໄດ້ຊີ້ນຳຂະແໜງ ການກ່ຽວຂ້ອງນຳເອົາບັນດາຮ່າງນິຕິກຳດັ່ງກ່າວໄປປັບປຸງຕາມການປະກອບຄຳເຫັນຂອງສະມາຊິກລັດຖະບານ ເປັນຕົ້ນ: ການກຳນົດຈຸດປະສົງ, ການອະທິບາຍຄຳສັບ, ການນຳໃຊ້ຄຳສັບ, ໂຄງຮ່າງນິຕິກຳ, ການກຳນົດ ແລະ ຈັດລຽງ-ປະກອບເນື້ອໃນ ໃຫ້ຄົບຖ້ວນສົມບູນ, ຈະແຈ້ງ, ຮັດກຸມ, ສອດຄ່ອງກັບກົດໝາຍ, ນິຕິກຳກ່ຽວຂ້ອງ ທີ່ໄດ້ປະກາດໃຊ້ແລ້ວ, ທັງສາມາດຈັດຕັ້ງປະຕິບັດໄດ້ຢ່າງມີປະສິດທິພາບ ແລະ ປະສິດທິຜົນ.

ນອກຈາກບັນດາຫົວຂໍ້ດັ່ງກ່າວແລ້ວ, ກອງປະຊຸມຍັງໄດ້ແຈກຢາຍ 5 ເອກະສານ ເພື່ອໃຫ້ສະມາຊິກລັດຖະບານ ນຳໄປຄົ້ນຄວ້າ ແລະ ປະກອບຄຳເຫັນເປັນລາຍລັກອັກສອນ ແລ້ວສົ່ງໃຫ້ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ເຊິ່ງປະກອບມີ: 1) ບົດສະຫຼຸບວຽກງານພົ້ນເດັ່ນປະຈຳເດືອນມັງກອນ-ກຸມພາ ແລະ ທິດທາງແຜນການປະຈຳເດືອນມີນາ 2026 ຂອງລັດຖະບານ; 2)ຮ່າງມະຕິວ່າດ້ວຍການຮັບຮອງແຜນການກໍ່ສ້າງ ແລະ ປັບປຸງເສັ້ນທາງ ໃນປີ 2026; 3) ຮ່າງມະຕິວ່າດ້ວຍການຮັບຮອງແຜນປະຕິບັດຕົວຈິງ ໃນການຫັນການເກັບລາຍຮັບເປັນທັນສະໄໝ ໃນໄລຍະ 5 ປີ (2026-2030); 4) ຮ່າງຂໍ້ຕົກລົງວ່າດ້ວຍການຮັບຮອງເອົາແຜນຫົວຂໍ້ເອກະສານທີ່ຈະນຳເຂົ້າພິຈາລະນາໃນກອງປະຊຸມລັດຖະບານ ປີ 2026; 5) ຮ່າງມະຕິວ່າດ້ວຍການແບ່ງຄວາມຮັບຜິດຊອບ ໃນການຈັດຕັ້ງປະຕິບັດມະຕິວ່າດ້ວຍການສ້າງເສດຖະກິດ ເອກະລາດ ເປັນເຈົ້າຕົນເອງ ໃນໄລຍະໃໝ່ ສະບັບເລກທີ 04/ກມສພ, ລົງວັນທີ 11 ເມສາ 2024 (ສະບັບປັບປຸງ).

ສຳລັບວຽກຈຸດສຸມຂອງລັດຖະບານ ໃນເດືອນມີນາ 2026, ກອງປະຊຸມໄດ້ເນັ້ນໜັກບາງບັນຫາດັ່ງນີ້:

ສຸມໃສ່ວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບທົ່ວປວງຊົນຮອບດ້ານ, ເອົາໃຈໃສ່ຕິດຕາມຊຸກຍູ້ວຽກງານກໍ່ສ້າງຮາກຖານການເມືອງ ພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກຂອງປະຊາຊົນ; ສະກັດກັ້ນ ແລະ ແກ້ໄຂບັນຫາຫຍໍ້ທໍ້ຕ່າງໆເປັນຕົ້ນ: ອຸປະຕິເຫດຕາມທ້ອງຖະໜົນ, ອັກຄີໄພ, ບັນຫາຢາເສບຕິດ, ກຸ່ມແກ໊ງສະແກມເມີ, ການໃສ່ຮ້າຍປ້າຍສີການຈັດຕັ້ງ ແລະ ການນຳພັກ-ລັດ ຜ່ານສື່ສັງຄົມອອນລາຍ ແລະ ອື່ນໆ.

ກະກຽມເນື້ອໃນລາຍງານຕໍ່ກອງປະຊຸມຄັ້ງປະຖົມມະລຶກຂອງສະພາແຫ່ງຊາດ ຊຸດທີ X ຄື: ບົດລາຍງານຍຸດທະສາດການພັດທະນາເສດຖະກິດ-ສັງຄົມ 10 ປີ (2026-2035) ແລະ ວິໄສທັດຮອດປີ 2055 ຂອງ ສປປລາວ; ບົດລາຍງານວຽກພົ້ນເດັ່ນ ປີ 2025 ແລະ 5 ປີ (2021-2025), ທິດທາງແຜນການປີ 2026 ແລະ ແຜນການ 5 ປີ(2026-2030) ຂອງລັດຖະບານ; ນອກນັ້ນ, ກໍມີບົດສະເໜີໂຄງປະກອບຄະນະລັດຖະບານ, ບົດກ່າວຮັບໜ້າທີ່.

ກະກຽມຄວາມພ້ອມຮອບດ້ານໃຫ້ແກ່ການຈັດກອງປະຊຸມຄັ້ງປະຖົມມະລຶກຂອງລັດຖະບານ ຊຸດທີ X ທີ່ຈະຈັດຂຶ້ນໃນທ້າຍເດືອນມີນາ ໂດຍສະເພາະເນື້ອໃນບັນດາຫົວຂໍ້ທີ່ຈະນຳເຂົ້າປຶກສາຫາລືໃນກອງປະຊຸມດັ່ງກ່າວ.

ສືບຕໍ່ແກ້ໄຂບັນຫາຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນ ໂດຍສະເພາະການປະຕິບັດບັນດາມາດຕະການຂອງຄະນະສະເພາະກິດ 19/ກມສພ; ໃຫ້ບັນດາກະຊວງ-ອົງການ ແລະ ທ້ອງຖິ່ນ ປະເມີນການຈັດຕັ້ງປະຕິບັດນະໂຍບາຍ ການສ້າງເສດຖະກິດ ເອກະລາດ ເປັນເຈົ້າຕົນເອງ.

ສືບຕໍ່ຊຸກຍູ້ບັນດາໂຄງການພັດທະນາດ້ານພະລັງງານໄຟຟ້າສະອາດ ແລະ ພະລັງງານທາງເລືອກ, ໂຄງການສາຍສົ່ງເຊື່ອມຕໍ່(ລາວ-ຈີນ, ລາວ-ຫວຽດນາມ), ເຊື່ອມຕໍ່ພາຍໃນປະເທດ; ຄຸ້ມຄອງໂຄງການຂຸດຄົ້ນ-ປຸງແຕ່ງແຮ່ທາດ ໃຫ້ເຂັ້ມງວດ, ສົ່ງເສີມການປຸງແຕ່ງເປັນຜະລິດຕະພັນ ສຳລັບແຮ່ທາດທີ່ສາມາດສ້າງມູນຄ່າເພີ່ມກ່ອນສົ່ງອອກຈຳໜ່າຍ.

ສືບຕໍ່ຕິດຕາມສະພາບການເໜັງຕີງຂອງລາຄາສິນຄ້າໃນທ້ອງຕະຫຼາດ ໃຫ້ເປັນປົກກະຕິ, ແກ້ໄຂບັນຫາໝູລົ້ນຕະຫຼາດ; ແກ້ໄຂບັນຫາດິນຍຸບຜ່ານມາ ໂດຍໃຫ້ສືບຕໍ່ປະເມີນສາເຫດ ແລະ ແກ້ໄຂຕາມທິດຊີ້ນຳຂອງກົມການເມືອງສູນກາງພັກ.

ສຸມໃສ່ການເກັບລາຍຮັບງົບປະມານຈາກແຫຼ່ງລາຍຮັບທີ່ມີແລ້ວ ໃຫ້ໄປຕາມທິດຫັນເປັນທັນສະໄໝ, ຮີບຮ້ອນປັບປຸງຮ່າງມະຕິວ່າດ້ວຍກຳນົດໜ້າວຽກ ແລະ ແບ່ງຄວາມຮັບຜິດຊອບໃນການຈັດຕັ້ງປະຕິບັດການຫັນການເກັບລາຍຮັບເປັນທັນສະໄໝ ທີ່ກອງປະຊຸມລັດຖະບານເປີດກວ້າງ ຄັ້ງທີ II ປີ 2025 ໄດ້ຊີ້ນຳຜ່ານມາ
ໃຫ້ສຳເລັດໄວ.

ສືບຕໍ່ປັບປຸງແລະກໍ່ສ້າງບັນດາເສັ້ນທາງ ແລະ ຂົວຕ່າງໆ ດ້ວຍທຶນທີ່ມີແລ້ວ ໃຫ້ສຳເລັດຕາມແຜນກຳນົດ; ສືບຕໍ່ຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດນະໂຍບາຍຊຸກຍູ້ສົ່ງເສີມການກໍ່ສ້າງເສັ້ນທາງໃນໄລຍະໃໝ່ ຕາມມະຕິ 10/ລບ, ລົງວັນທີ 01 ກັນຍາ2025 ໂດຍໃຫ້ຮີບຮ້ອນປັບປຸງມະຕິວ່າດ້ວຍການຮັບຮອງແຜນການກໍ່ສ້າງ ແລະ ປັບປຸງຂົວທາງ ໄລຍະປີ2026-2030 ໃຫ້ສຳເລັດ ແລະ ໄດ້ລົງລາຍເຊັນໄວ.

ເອົາໃຈໃສ່ຕິດຕາມສະພາບການ ແລະ ສະກັດກັ້ນບັນຫາໄຟໄໝ້ລາມປ່າແຕ່ຫົວທີ ໂດຍສະເພາະເຂດທ່ອງທ່ຽວທຳມະຊາດ, ເຂດຕົ້ນນ້ຳຕ່າງໆ ໂດຍສືບຕໍ່ຈັດຕັ້ງປະຕິບັດຕາມຄຳສັ່ງເລກທີ 11/ນຍ ຢ່າງເຂັ້ມງວດ; ເອົາໃຈໃສ່ຄົ້ນຄວ້າອອກໃບຕາດິນ ໃຫ້ບັນລຸຕາມແຜນການທີ່ວາງໄວ້.

ຍົກລະດັບດ້ານປະລິມານ ແລະຄຸນນະພາບ ຂອງວຽກງານພັດທະນາການສຶກສາ, ການຄົ້ນຄວ້າວິທະຍາສາດ ແລະ ການກິລາ ໃຫ້ສາມາດຕອບສະໜອງໄດ້ກັບຄວາມຮຽກຮ້ອງຕ້ອງການຂອງການພັດທະນາ ແລະ ສະພາບການໃນໄລຍະໃໝ່; ສຸມໃສ່ການຄົ້ນຄວ້າວິທະຍາສາດ, ສ້າງເປັນຜະລິດຕະພັນອອກສູ່ສັງຄົມ ໃຫ້ນັບມື້ຫຼາຍຂຶ້ນຕາມທິດເສດຖະກິດເອກະລາດເປັນເຈົ້າຕົນເອງ; ພັດທະນາ, ສົ່ງເສີມກິລາມວນຊົນ ແລະກິລາມືອາຊີບ ໃຫ້ກວ້າງຂວາງ; ເອົາໃຈໃສ່ເສີມຂະຫຍາຍມູນເຊື້ອກິລາທີ່ເປັນທ່າແຮງ ໃຫ້ພົ້ນເດັ່ນ, ສາມາດຍາດໄດ້ຫຼຽນປະເພດຕ່າງໆ ໃນລະດັບພາກພື້ນ ແລະ ສາກົນ.

ສືບຕໍ່ປັບປຸງພື້ນຖານໂຄງລ່າງສິ່ງອຳນວຍຄວາມສະດວກດ້ານການທ່ອງທ່ຽວ ເປັນຕົ້ນແມ່ນເສັ້ນທາງໃນຕົວເມືອງທ່ອງທ່ຽວຕ່າງໆ; ສ້າງແຜນກິດຈະກຳຢູ່ບັນດາສະຖານທີ່ທ່ອງທ່ຽວ; ຕິດຕາມ, ກວດກາ ແລະ ຄຸ້ມຄອງ ບັນດາບໍລິສັດທ່ອງທ່ຽວ, ໂຮງແຮມ, ເຮືອນພັກ, ຮ້ານອາຫານ ແລະຮ້ານບັນເທີງ, ພະນັກງານນຳທ່ຽວ ໃຫ້ເຄື່ອນໄຫວຖືກຕ້ອງຕາມລະບຽບກົດໝາຍແລະແກ້ໄຂປາກົດການຫຍໍ້ທໍ້ທີ່ຕິດພັນກັບທຸລະກິດການທ່ອງທ່ຽວ ໂດຍສະເພາະຄວາມປອດໄພຂອງນັກທ່ອງທ່ຽວ ແລະ ອື່ນໆ.

ສືບຕໍ່ປັບປຸງຄຸນນະພາບການບໍລິການສາທາລະນະສຸກ ຕາມນະໂຍບາຍ 5 ດີ 1 ພໍໃຈ; ສືບຕໍ່ກະກຽມການຫັນໂຮງໝໍກຸ້ມຕົນເອງ ໃຫ້ສາມາດຕອບສະໜອງໄດ້ຄວາມຮຽກຮ້ອງຕ້ອງການຂອງສັງຄົມ, ສາມາດສ້າງຄວາມເຊື່ອໝັ້ນ ແລະ ດຶງການບໍລິການ ໃຫ້ສູງຂຶ້ນ; ສຸມໃສ່ປັບປຸງພື້ນຖານໂຄງລ່າງ, ປະກອບບຸກຄະລາກອນ ແລະອຸປະກອນການແພດທີ່ທັນສະໄໝ ທັງຢູ່ຂັ້ນສູນກາງ ແລະ ທ້ອງຖິ່ນ.

ສຸມໃສ່ຈັດຕັ້ງຜັນຂະຫຍາຍຜົນກອງປະຊຸມສຸດຍອດຕ່າງໆ, ຜົນການເຄື່ອນໄຫວວຽກງານຕ່າງປະເທດຂອງການນຳພັກ-ລັດ, ແຜນຮ່ວມມືສອງຝ່າຍກັບບັນດາປະເທດເພື່ອນມິດຍຸດທະສາດ ແລະ ຂອບການຮ່ວມມືຫຼາຍຝ່າຍໃນອະນຸພາກພື້ນ ໃຫ້ເປັນຮູບປະທຳຫຼາຍຂຶ້ນ; ສືບຕໍ່ປະສານງານ ແລະ ກະກຽມຄວາມພ້ອມດ້ານຕ່າງໆ ໃນການຕ້ອນຮັບການນຳຂັ້ນສູງຕ່າງປະເທດ ທີ່ຈະມາຢ້ຽມຢາມ ສປປ ລາວ.

ກອງປະຊຸມໄດ້ຮຽກຮ້ອງມາຍັງບັນດາທ່ານສະມາຊິກລັດຖະບານ ຈົ່ງນຳເອົາແຜນວຽກຈຸດສຸມເດືອນມີນາ ໄປປັບປຸງເຂົ້າໃນແຜນຈັດຕັ້ງປະຕິບັດວຽກງານຂອງຂະແໜງການຕົນ ໃຫ້ລະອຽດ, ມີການແບ່ງຄວາມຮັບຜິດຊອບໃຫ້ການຈັດຕັ້ງ ແລະ ບຸກຄະລາກອນແຕ່ລະຂັ້ນ, ມີຄາດໝາຍເວລາສຳເລັດຊັດເຈນ, ສອດຄ່ອງກັບສະພາບຄວາມເປັນຈິງຂອງແຕ່ລະຂະແໜງການ ໃຫ້ແຂງແຮງ ແລະ ໄດ້ຮັບຜົນດີ.

**(ກົມປະຊາສຳພັນ, ສນຍ)**

## ຜົນການເລືອກຕັ້ງ...

(ຕໍ່ຈາກໜ້າ 7)

4. ທ່ານ ນາງ ສັນທະນາ ພອນ ແກ້ວບັນດິດ ກຳມະການພັກເມືອງ, ເລຂາຄະນະບໍລິຫານງານຊາວໜຸ່ມເມືອງ;

5. ທ່ານ ສັນຈອນ ສິດທິໄຊກຳມະການພັກເມືອງ, ຫົວໜ້າຫ້ອງວ່າການເມືອງ.

**- ເມືອງສຸຂຸມາ ຈຳນວນ 5 ທ່ານ, ຍິງ 1 ທ່ານ ຄື:**

1. ທ່ານ ປອ. ຄຳໄຕ ແກ້ວປະເສີດ ກຳມະການພັກແຂວງ, ເລຂາຄະນະບໍລິຫານງານພັກເມືອງ;

2. ທ່ານ ສຸວັນນະລາດ ສີຫານົນ ກຳມະການພັກແຂວງ, ເລຂາຄະນະບໍລິຫານງານຊາວໜຸ່ມແຂວງ;

3. ທ່ານ ແພງວິໄລ ສີອາລຸນ ຮອງຫົວໜ້າຈຸພັກ, ຮອງຫົວໜ້າຫ້ອງວ່າການສະພາປະຊາຊົນແຂວງ;

4. ທ່ານ ສາຍຄຳ ຄຳແກ້ວ ກຳມະການພັກເມືອງ, ຫົວໜ້າຫ້ອງວ່າການເມືອງ;

5. ທ່ານ ນາງ ລັດຕະນາ ດວງດາວ ກຳມະການພັກເມືອງ, ປະທານສະຫະພັນແມ່ຍິງເມືອງ.

**- ເມືອງມູນລະປາໂມກ ຈຳນວນ 5 ທ່ານ, ຍິງ 1 ທ່ານ ຄື:**

1. ທ່ານ ສົມສັກ ເສົາວະລັດ ກຳມະການພັກແຂວງ, ເລຂາຄະນະບໍລິຫານງານພັກເມືອງ;

2. ທ່ານ ປອ. ດຣ. ນັນທະສານ ວັນນະວົງ ກຳມະການພັກແຂວງ, ຫົວໜ້າພະແນກສາທາລະນະສຸກແຂວງ;

3. ທ່ານ ບຸນຮອນ ໄຊຍະວົງ ຮອງປະທານຄະນະກຳມະການວັດທະນະທຳ-ສັງຄົມ ແລະ ບັນດາເຜົ່າ ສະພາປະຊາຊົນແຂວງ;

4. ທ່ານ ທອງວັນ ລຶມມະລິ ກຳມະການພັກເມືອງ, ຮອງປະທານກວດກາລັດເມືອງ;

5. ທ່ານ ນາງ ສຸດໃຈ ອິນທະວົງ ຮອງຫົວໜ້າຫ້ອງການສຶກສາທິການ ແລະ ກິລາເມືອງ.

**- ເມືອງໂຂງ ຈຳນວນ 5 ທ່ານ, ຍິງ 2 ທ່ານ ຄື:**

1. ທ່ານ ສາທິດ ປັດສາພັນ ກຳມະການພັກແຂວງ, ເລຂາຄະນະບໍລິຫານງານພັກເມືອງ;

2. ທ່ານ ນາງ ເຂັມຄຳ ກິດຕິພັນ ຮອງປະທານຄະນະກຳມະການຍຸຕິທຳ ແລະ ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ;

3. ທ່ານ ພູທົງ ຫຼວງໄຊຍະລາດ ຄະນະພັກຮາກຖານພະແນກອຸດສາຫະກຳ ແລະ ການຄ້າ, ຫົວໜ້າຝ່າຍຄຸ້ມຄອງລະບົບໄຟຟ້າພາກໃຕ້;

4. ທ່ານ ພັທ. ກໍປະສິດ ວົງພູທອນຄະນະປະຈຳພັກເມືອງ, ຫົວໜ້າການເມືອງກອງບັນຊາການທະຫານເມືອງ;

5. ທ່ານ ນາງ ໄພວັນ ສີບຸນເຮືອງ ກຳມະການພັກເມືອງ, ເລຂາຄະນະພັກຮາກຖານ ກຸ່ມຫາດຊາຍຄູນ.

**(ຈັນທະວິສັກ ແລະ ສົມວິຈິດ ໄຊມີນຕີ)**



---

ອາດ ກະວີລາວ

# ບົດບາດແມ່ຍິງ

**# ດອກຂ່າ ຖິ່ນນາໂນນ**

❊ ແມ່ຍິງນາມຊື່ນີ້ ຄືງຄ່າຄວາມດີ
ເປັນສະຕີຂັນແຂງ ທຽບທັນບາທ້າວ
ວຽກໜັກເບົາທັນທ້າວ ສຸມໃຈກັນໃສ່
ງານໃດກໍຫາກແລ້ວ ສຳເລັດໄດ້ດັ່ງໝາຍ

❊ ບໍ່ວ່າການປູກເຂົ້າ ຖາງໄຮ່ໄຖນາ
ຕ່ຳສິ້ນໄໝອາພອນ ເລກເບີຂາຍຄ້າ
ທັງວິຊາການດ້ວຍ ການຮຽນຂຽນເກັ່ງ
ການສອບເສັງເລື່ອນຊັ້ນ ບໍ່ມີຄ້າງຂອດຄາ

❊ ການທະຫານກໍຍິ່ງກ້າວ ທຽມເທົ່າຊຸມຊາຍ
ການກິລາທັງຫຼາຍ ຍາດໄຊຊີງໄດ້
ຍ້ອນນາງເອົາຕົວຕັ້ງ ໃຈຈິງຂັນແຂ່ງ
ເຂັ້ມແຂງຢືນຕໍ່ສູ້ ບໍ່ມີຢ້ານຫວັ່ນເກງ ແທ້ໃດ!

❊ ປະເພນີມີແຕ່ເຄົ້າ ຄຽງຄູ່ນວນນາງ
ນຸ່ງຖືຮຽງປະສານ ແຕ່ງເຕີມເອົາໄວ້
ທັງສິ້ນໄໝຜົມເກົ້າ ຜືນແຜພາດບ່ຽງ
ເຂົ້າວັດພຽງພໍ່າພ້ອມ ຕອມຕຸ້ມບໍ່ໄລ ງາມເດ!

❊ ຄັນເລື່ອງໃນບ່ອນຢັ້ງ ເຮືອນຢູ່ອາໄສ
ກໍຫາກໄວວາທຳ ຄ່ຳແລງທັງເຊົ້າ
ປຸງແຕ່ງແກງກ້ອຍ ຍໍມາຕົບແຕ່ງ
ເປັນໜຶ່ງແຮງຊ່ວຍຊວ້ານ ຄອບຄົວໃຫ້ຢູ່ເຢັນ ນັ້ນນາ!

❊ ຄັນວ່າຂຽນຂີດຂໍ້ ຍໍຍົກສັກສີ
ບໍ່ອາດບັນຍາຍໝົດ ຄ່າຄຸນຈາຈໍ້
ຍັງມີຫຼາຍກະດໍ້ ການກະທຳພົ້ນເດັ່ນ ເບິ່ງແມ
8 ມີນາ ເພິ່ນກ່າວເນັ້ນ ຍໍຍ້ອງໝູ່ຍິງ ຊອບແລ້ວ!

---



## ຫັກຫາຍ ສະບາຍ

**(ເລື່ອງເບົາໆ ເອົ້າແບບກັນເອງ ບໍ່ເຄັ່ງພິທີການ)**

**# ສຽມທ້ຽນ**

❊ **ວັນ**ແມ່ຍິງສາກົນ **8 ມີນາ** ໄດ້ໝູນວຽນມາບັນຈົບຄົບຮອບ **116 ປີ** ຮຽມຂໍອາໄສເວທີນີ້ ຝາກສົ່ງພອນໄຊ ໃຫ້ແມ່ຍິງທັງປວງ ສວ່າງໃຈສະບາຍເບື້ອ ມີຄວາມສຸກສົມແມ້ງ ມະໂນໃນໃຈຄິດ ຊີວິດສຸກລາບລື້ນ ສົມໃຈຕັ້ງປາຖະໜາ ສາມີທັງລູກພ້ອມ ສອນບອກຟັງຄວາມ ຢ່າໄດ້ໂລເລຄິດ ບອກກາຍໃຈເຈົ້າ ເງິນຄ່າໄຫຼໂຮມເຂົ້າ ໂພຍໄພໜີຫ່າງ ທັງວຽກງານເດັ່ນກ້າວ ຈະເລີນໜ້າຢ່າເສື່ອມຖອຍ **ທ່ານເອີຍ!**

❊ **ຕາມ**ຂ່າວໃຫ້ຮູ້ວ່າມີການ**ປັບລາຄານໍ້າມັນເຊື້ອໄຟຂຶ້ນ**ອີກຄັ້ງໃໝ່ໃນຂອບເຂດທົ່ວປະເທດ ເຊິ່ງແຈ້ງການມີກຳນົດເລີ່ມນຳໃຊ້ນັບແຕ່ວັນທີ **4 ມີນາ**ເປັນຕົ້ນໄປ ພາຫະນະແລ່ນລໍ້ ລຽນລຽບຕາມທາງ ຕ່າງກໍຕື່ມນໍ້າມັນ ສົ່ງຂາຍສິນຄ້າ ເມື່ອລາຄາຕິງເຕື້ອງ ວັດຖຸຕ່າງແປປ່ຽນ **ລາຄາເອີຍ!** ອຸກໃຈຍາມຈ່າຍຊື້ ເງິນໃຊ້ຊິບໍ່ພໍ **ຫຼາຍຄົນຈາລົ່ມເອົ້າ** ສົມທຽບຫຼາຍບັນຫາ ທຽບເຄື່ອງລາຄາ ຈ່າຍຈັບຂາຍ-ຊື້ ຟັງເບິ່ງຄືຊິແທ້ ແຕ່ຫຼາຍຄົນກໍຍອມຮັບ **ໄດ້ເດີ!** ທັງມິດງຽບພໍ່າພ້ອມ ປະຢັດໃຫ້ໄດ້ກວ່າເດີມ **ນັບແລ້ວ!**

---

## 🤗 ຊອບຍິ້ມ 🤗

# ພົ້ງຄຶງ

### ເລື່ອງ: ນົກເຂົາພະອາຈານ

ພະອາຈານຢູ່ວັດແຫ່ງໜຶ່ງເປັນຄົນທີ່ຮັກສັດ ລາວໄດ້ລ້ຽງນົກເຂົາໂຕໜຶ່ງໄວ້ແຍງ; ຕໍ່ມາ, ນົກເຂົາໂຕນັ້ນໄດ້ເສຍໄປໂດຍບໍ່ຮູ້ ເຮັດໃຫ້ພະອາຈານຄິດເສຍດາຍຢ່າງໜັກ, ຈຶ່ງຢາກໃຫ້ຄົນຊອກຊ່ອຍ. ຈົນມາຮອດມື້ວັນສິນໃຫຍ່, ມີອອກຕົນຍາດໂຍມອັ່ງອໍ່ເຕັມສາລາ, ພະອາຈານຈຶ່ງຖາມອອກໄປວ່າ:

"ໂຍມເອີຍ... ກ່ອນທີ່ຈະເທດ, ພະອາຈານຂໍຖາມແດ່ ຢູ່ນີ້ໃຜມີນົກເຂົາແດ່?"

ບັນດາໂຍມຜູ້ຊາຍທັງສາລາ ຍົກມືຂຶ້ນພຶບ!!!

ພະອາຈານຮູ້ແລ້ວວ່າມີຄວາມເຂົ້າໃຈຜິດເກີດຂຶ້ນ, ຈຶ່ງຄິດຊິໃຊ້ຄຳເວົ້າໃໝ່:

"ບໍ່ແມ່ນແບບນັ້ນ, ພະອາຈານໝາຍຄວາມວ່າ ມີໃຜເຄີຍຈັບນົກເຂົາບໍ່?"

ບັນດາໂຍມຜູ້ຍິງທັງສາລາຍົກມືຂຶ້ນພຶບ!!! ພ້ອມກັບຢ່າງບໍ່ໄດ້ນັດໝາຍ

"ບໍ່ແມ່ນແບບນັ້ນ...ຄືວ່າ...ເອີ...ມີໃຜເຄີຍເຫັນນົກເຂົາພະອາຈານແດ່?"

ປາກົດວ່າແມ່ຊີຍົກມືຂຶ້ນທັງວັດເລີຍ !!!

---

## ສຸພາສິດ-ຄະຕິເຕືອນໃຈ

**# ດອກຫຍ້າ**

"ຍິ່ງສະແຫວງຫາ ຍິ່ງຫຼົງໄຫຼ
ຍິ່ງປ່ອຍວາງ ຍິ່ງຄົ້ນພົບ"

ລັດຖະສະພາຕ່າງປະເທດ

# ປິດກອງປະຊຸມຄະນະປະຈຳສະພານິຕິບັນຍັດສູງສຸດຂອງຈີນ



(Xinhua) - ຄະນະປະຈຳຂອງສະພາຜູ້ແທນປະຊາຊົນທົ່ວປະເທດຈີນ (NPC) ຊຸດທີ XIV ໄດ້ປິດກອງປະຊຸມສະໄໝທີ 21 ເມື່ອວັນພະຫັດທີ 26 ກຸມພາຜ່ານມາຫຼັງຈາກດຳເນີນເປັນເວລາ 2 ວັນ ໂດຍການເປັນປະທານຂອງ ຈ້າວເລີ້ຈີ້ປະທານຄະນະປະຈຳ NPC; ກອງປະຊຸມໄດ້ລົງມະຕິປົດ ຫວັງ ຊຽງຊີ (Wang Xiangxi) ອອກຈາກຕຳແໜ່ງລັດຖະມົນຕີກະຊວງຄຸ້ມຄອງເຫດການສຸກເສີນ. ສີ ຈິ້ນຜິງ ໄດ້ລົງນາມໃນຄຳສັ່ງປະທານປະເທດ ກ່ຽວກັບການປົດຫວັງ.

ກອງປະຊຸມ ໄດ້ລົງມະຕິ:

- ອະນຸມັດບົດລາຍງານກ່ຽວກັບມາດຕະຖານຂອງຜູ້ແທນປະຊາຊົນ ແລະ ຮ່າງກົດໝາຍທີ່ກ່ຽວຂ້ອງກັບບຸກຄະລາກອນອື່ນໆ.

-ອະນຸມັດໂດຍຫຼັກການຮ່າງບົດລາຍງານການເຄື່ອນໄຫວວຽກງານຂອງຄະນະປະຈຳສະພາຜູ້ແທນປະຊາຊົນທົ່ວປະເທດຈີນ; ຄະນະປະທານຄະນະປະຈຳ ສະເໜີມອບໝາຍໃຫ້ຈ້າວ ເປັນຜູ້ນຳສະເໜີບົດລາຍງານດັ່ງກ່າວຕໍ່ກອງປະຊຸມສະໄໝສາມັນເທື່ອທີ 4 ຂອງ NPC ຊຸດທີ XIV ທີ່ຈະມາເຖິງ.

-ຮັບຮອງຮ່າງວາລະກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາສະພາຜູ້ແທນປະຊາຊົນທົ່ວປະເທດຈີນ ແລະ ຮ່າງລາຍຊື່ຄະນະປະທານ ແລະ ກອງເລຂາຂອງກອງປະຊຸມ, ແລະ ຕົກລົງສົ່ງບັນດາຮ່າງເອກະສານດັ່ງກ່າວໄປຍັງກອງປະຊຸມກະກຽມໃຫ້ແກ່ກອງປະຊຸມສະໄໝສາມັນຂອງ NPC ເພື່ອພິຈາລະນາ; ນອກຈາກນີ້, ຍັງຮັບຮອງລາຍຊື່ສະມາຊິກສະພາທີ່ຖືກເຊີນໃຫ້ເຂົ້າຮ່ວມກອງປະຊຸມສະໄໝສາມັນເທື່ອທີ 4 ໃນຖານະຜູ້ເຂົ້າຮ່ວມທີ່ບໍ່ໄດ້ລົງຄະແນນສຽງ, ລວມທັງເອກະສານອື່ນໆອີກດ້ວຍ.

ໃນການກ່າວປິດກອງປະຊຸມ, ຈ້າວ ເນັ້ນໜັກວ່າ ກອງປະຊຸມສະໄໝສາມັນປະຈຳປີຂອງສະພາຜູ້ແທນປະຊາຊົນທົ່ວປະເທດຈີນ ທີ່ຈະມາເຖິງນີ້ ຈະທົບທວນ ແລະ ອະນຸມັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ XV (2026-2030); ພິຈາລະນາຮ່າງປະມວນກົດໝາຍສິ່ງແວດລ້ອມ, ຮ່າງກົດໝາຍວ່າດ້ວຍການສົ່ງເສີມຄວາມສາມັກຄີ ແລະ ຄວາມກ້າວໜ້າຂອງບັນດາເຜົ່າ, ແລະ ຮ່າງກົດໝາຍວ່າດ້ວຍການວາງແຜນພັດທະນາແຫ່ງຊາດ, ລວມທັງເອກະສານອື່ນໆ.

ຈ້າວ ຮຽກຮ້ອງໃຫ້ຄະນະປະຈຳສະພາຜູ້ແທນປະຊາຊົນທົ່ວປະເທດຈີນ ສຸມໃສ່ພາລະກິດພື້ນຕໍ່ຂອງພັກ ແລະ ປະເທດຊາດ ແລະ ປະຕິບັດໜ້າທີ່ຂອງຕົນຕາມກົດໝາຍດ້ວຍຄວາມຮັບຜິດຊອບສູງ; ນອກຈາກນັ້ນ, ຍັງຮຽກຮ້ອງໃຫ້ຄະນະປະຈຳເປີດຮັບຂໍ້ສະເໜີຈາກສະມາຊິກສະພາ ແລະ ຍິນດີຮັບການຊີ້ນຳ ເພື່ອຮັບປະກັນວ່າກອງປະຊຸມສະໄໝສາ ມັນປະຈຳປີຂອງ NPC ທີ່ຈະມາເຖິງນີ້ ຈະຈັດຂຶ້ນຢ່າງມີປະສິດທິພາບ ແລະ ເປັນຮູບປະທຳ.

ກ່ອນການປິດກອງປະຊຸມ, ຈ້າວ ໄດ້ເປັນປະທານກອງປະຊຸມຄະນະປະທານ ແລະ ເປັນປະທານໃນການບັນລະຍາຍໃຫ້ແກ່ສະມາຊິກສະພາຫຼັງຈາກປິດກອງປະຊຸມ.

# ເຢຍລະມັນ ປະກາດຂໍ້ຕົກລົງໃໝ່ ຍົກເລີກກົດໝາຍ “ລະບົບສ້າງຄວາມຮ້ອນສີຂຽວ”




(Bloomberg) - ວັນທີ 25 ກຸມພານີ້, ລັດຖະບານແບກແລັງ ໄດ້ປະກາດຂໍ້ຕົກລົງກົດໝາຍໃໝ່ ກ່ຽວກັບປະສິດທິພາບການໃຊ້ພະລັງງານຂອງອາຄານ ເຊິ່ງເປັນການຍົກເລີກກົດໝາຍສະບັບກ່ອນໜ້ານີ້ ທີ່ມີຜົນບັງຄັບໃຊ້ເມື່ອປີ 2024 ໂດຍໄດ້ຮັບການສະໜັບສະໜູນຈາກພັກຂຽວໃນລັດຖະບານປະສົມຂອງອະດີດນາຍົກລັດຖະມົນຕີ ໂອລາຟ ໂຊລຊ໌ (Olaf Scholz) ແລະ ກຳນົດວ່າລະບົບສ້າງຄວາມຮ້ອນໃໝ່ໃດໆກໍຕາມຕ້ອງໃຊ້ພະລັງງານທົດແທນຢ່າງໜ້ອຍ 65%; ແຕ່ຊາວເຢຍລະມັນຈຳນວນຫຼາຍພັດເຫັນວ່າເປົ້າໝາຍດ້ານສິ່ງແວດລ້ອມທີ່ມີຄວາມທະເຍີທະຍານນີ້ ມີລາຄາແພງ, ມີຂັ້ນຕອນທາງລັດຖະການທີ່ຫຍຸ້ງຍາກ, ແລະ ມີຂະບວນການບັງຄັບໃຊ້ທີ່ຊັບຊ້ອນ ແລະ ວ່ອງໄວເກີນໄປ.

ຄາດວ່າ ຮ່າງກົດໝາຍຈະສຳເລັດພາຍໃນຕົ້ນເດືອນເມສາ ແລະ ລັດຖະບານ ຈະບັງຄັບໃຊ້ກົດໝາຍໃໝ່ກ່ອນວັນທີ 1 ກໍລະກົດ 2026.

ເຢນສ໌ ສະປານ (Jens Spahn) ຫົວໜ້າກຸ່ມລັດຖະສະພາເຢຍລະມັນຈາກພັກອະນຸລັກນິຍົມ ກ່າວວ່າ “ການສ້າງຄວາມຮ້ອນຈະເປັນເລື່ອງສ່ວນຕົວອີກຄັ້ງ, ປະຊາຊົນຈະມີອິດສະຫຼະໃນການຕັດສິນໃຈດ້ວຍຕົນເອງວ່າພວກເຂົາຈະສ້າງຄວາມຮ້ອນໃຫ້ແກ່ເຮືອນຂອງຕົນແນວໃດ ໂດຍພວກເຮົາຈະຍົກເລີກຂໍ້ຈຳກັດ ແລະ ລະບົບລັດຖະການທີ່ບໍ່ຈຳເປັນໃນກົດໝາຍເກົ່າ”.

ຢ່າງໃດກໍຕາມ, ນັກໂຄສະນາສິ່ງແວດລ້ອມ ໄດ້ວິພາກວິຈານຂໍ້ຕົກລົງໃໝ່ຂອງລັດຖະບານແບກແລັງ ເນື່ອງຈາກເຢຍລະມັນມີຄວາມສ່ຽງທີ່ຈະຕາມບໍ່ທັນເປົ້າໝາຍໃນການຮັບມືກັບການປ່ຽນແປງສະພາບອາກາດ ຕັ້ງແຕ່ປີ 2030-2045.

# Mexico ຜ່ານຮ່າງກົດໝາຍຫຼຸດຊົ່ວໂມງເຮັດວຽກ ເຫຼືອ 40 ຊົ່ວໂມງຕໍ່ອາທິດ

(Reuters) - ລັດຖະສະພາເມັກຊິກ ອະນຸມັດຮ່າງກົດໝາຍຫຼຸດຊົ່ວໂມງການເຮັດວຽກຕໍ່ອາທິດ ຈາກ 48 ເຫຼືອ 40 ຊົ່ວໂມງ ເທື່ອລະໜ້ອຍ, ເຖິງວ່າມີການຕໍ່ຕ້ານຈາກສະຫະພາບແຮງງານ ເຊິ່ງໂຕ້ຖຽງວ່າການແກ້ໄຂນີ້ ຍັງບໍ່ພຽງພໍທີ່ຈະຊ່ວຍເຫຼືອຜູ້ອອກແຮງງານ.

ສະພາຜູ້ແທນປະຊາຊົນເມັກຊິກ ອະນຸມັດໂຄງຮ່າງທົ່ວໄປຂອງຮ່າງກົດໝາຍ ເມື່ອຄືນວັນອັງຄານທີ 24 ກຸມພານີ້ (ຕາມເວລາທ້ອງຖິ່ນ) ໂດຍໄດ້ຮັບການສະໜັບສະໜູນຈາກສະມາຊິກສະພາ 469 ຄົນ ທີ່ເຂົ້າຮ່ວມກອງປະຊຸມ ຈາກທັງໝົດ 500 ຄົນ ແລະ ບໍ່ມີຜູ້ໃດລົງຄະແນນສຽງຄັດຄ້ານ; ໃນການລົງຄະແນນສຽງຄັ້ງທີສອງ ເຊິ່ງຈັດຂຶ້ນຫຼັງຈາກພິຈາລະນາມາດຕາຕ່າງໆຂອງຮ່າງກົດໝາຍແລ້ວ, ປາກົດວ່າສະມາຊິກສະພາ 411 ຄົນ ສະໜັບສະໜູນຮ່າງກົດໝາຍ, ຂະນະທີ່ 58 ຄົນ ຄັດຄ້ານ.

ແຜນການປະຕິຮູບນີ້ ໄດ້ຮັບການອະນຸມັດໃນສະພາສູງເມື່ອຕົ້ນເດືອນດຽວກັນ, ເຖິງວ່າສະມາຊິກສະພາຝ່າຍຄ້ານ ສະແດງຄວາມກັງວົນກ່ຽວກັບຮ່າງກົດໝາຍໃນວາລະທຳອິດ ກ່ອນຮ່ວມຮັບຮອງໃນທີ່ສຸດ ຫຼັງຈາກການປະຊຸມມາ ຣາທອນທີ່ຍາວນານກວ່າ 10 ຊົ່ວໂມງ.

ນາງ ຄລໍເດຍ ໄຊບາມ (Claudia Sheinbaum) ປະທານາທິບໍດີເມັກຊິກ ສະເໜີຮ່າງກົດໝາຍນີ້ເມື່ອເດືອນທັນວາປີຜ່ານມາ, ໂດຍມີຈຸດປະສົງທີ່ຈະນຳຊົ່ວໂມງການເຮັດວຽກ 40 ຊົ່ວໂມງຕໍ່ອາທິດມາໃຊ້ ເຊິ່ງຈະເປັນການປັບຫຼຸດປີລະສອງຊົ່ວໂມງ ຈົນຮອດປີ 2030 ແລະ ຈະເປັນປະໂຫຍດຕໍ່ຜູ້ອອກແຮງງານປະມານ 13.4 ລ້ານຄົນ.



# ຄະນະກຳມະການເລືອກຕັ້ງຂອງປະເທດໄທ ຮັບຮອງຜົນການເລືອກຕັ້ງ ສສ 396 ເຂດ




(Xinhua) - ວັນພຸດທີ 25 ກຸມພານີ້, ຄະນະກຳມະການເລືອກຕັ້ງຂອງປະເທດໄທ ໄດ້ຮັບຮອງຜົນການເລືອກຕັ້ງຢ່າງເປັນທາງການສຳລັບທີ່ນັ່ງໃນເຂດເລືອກຕັ້ງ 396 ເຂດ ຈາກທັງໝົດ 500 ທີ່ນັ່ງໃນສະພາຜູ້ແທນລາດສະດອນ ຫຼັງຈາກການເລືອກຕັ້ງທົ່ວໄປທີ່ຈັດຂຶ້ນເມື່ອວັນອາທິດທີ 8 ກຸມພາຜ່ານມາ.

ຄະນະກຳມະການກ່າວວ່າ ການປະກາດດັ່ງກ່າວເປັນໄປຕາມຂໍ້ກຳນົດທາງກົດໝາຍ ທີ່ກຳນົດໃຫ້ຕ້ອງໄດ້ຮັບການຮັບຮອງຢ່າງໜ້ອຍ 95% ຂອງທີ່ນັ່ງໃນເຂດເລືອກຕັ້ງທັງໝົດ 400 ທີ່ນັ່ງ ພາຍໃນ 60 ວັນຫຼັງຈາກການເລືອກຕັ້ງ, ໂດຍມີເງື່ອນໄຂວ່າການກວດສອບເບື້ອງຕົ້ນຊີ້ບອກວ່າການເລືອກຕັ້ງດຳເນີນການຢ່າງສຸດຈະລິດ ແລະ ຍຸຕິທຳ; ໃນຖະແຫຼງການ, ຄະນະກຳມະການລະບຸວ່າ ທີ່ນັ່ງໃນສີ່ເຂດເລືອກຕັ້ງຍັງບໍ່ໄດ້ຮັບການຮັບຮອງ ເນື່ອງຈາກການນັບຄະແນນໃໝ່ຍັງດຳເນີນຢູ່.

ການຮັບຮອງສະມາຊິກສະພາຜູ້ແທນລາດສະດອນ(ສສ) ແບບບັນຊີລາຍຊື່ ຍັງຢູ່ລະຫວ່າງການພິຈາລະນາແລະຈະປະກາດໃນພາຍຫຼັງ.

ສສ ທີ່ໄດ້ຮັບການຮັບຮອງໃໝ່ ຈະຕ້ອງໄປຮັບໜັງສືຮັບຮອງຢ່າງເປັນທາງການທີ່ສຳນັກງານໃຫຍ່ຂອງຄະນະກຳມະການເລືອກຕັ້ງ ເລີ່ມແຕ່ວັນທີ 26 ກຸມພາເປັນຕົ້ນໄປ.

# Nigeria ປັບຕາຕະລາງການເລືອກຕັ້ງທົ່ວໄປປີ 2027



(Xinhua)-ການເລືອກຕັ້ງປະທານາທິບໍດີຄັ້ງຕໍ່ໄປຂອງນິເຊຣີ ຈະຈັດຂຶ້ນໄວກວ່າກຳນົດເດີມຫຼາຍກວ່າໜຶ່ງເດືອນ, ຫຼັງຈາກຄະນະກຳມະການເລືອກຕັ້ງແຫ່ງຊາດເອກະລາດ (Independent National Electoral Commission - INEC) ຂອງນິເຊຣີ ໄດ້ເຜີຍແຜ່ຕາຕະລາງໃໝ່ທີ່ໄດ້ຮັບການປັບປຸງໃນຕອນແລງວັນພະຫັດທີ 26 ກຸມພາຜ່ານມາ; ຕາມຕາຕະລາງໃໝ່, ການເລືອກຕັ້ງປະທານາທິບໍດີ ແລະ ສະພາແຫ່ງຊາດ ຈະຈັດຂຶ້ນໃນວັນທີ 16 ມັງກອນ 2027, ຂະນະທີ່ການເລືອກຕັ້ງຜູ້ວ່າການລັດແລະສະພາແຫ່ງລັດ ຈະຈັດຂຶ້ນໃນວັນທີ 6 ກຸມພາ 2027.

INEC ກ່າວວ່າ ການເລືອກຕັ້ງຖືກກຳນົດໄວ້ໃນເບື້ອງຕົ້ນແມ່ນວັນທີ 20 ກຸມພາແລະ 6 ມີນາ 2027 ຕາມລຳດັບພາຍໃຕ້ກົດໝາຍການເລືອກຕັ້ງປີ 2022, ແຕ່ຕາຕະລາງຖືກປັບຫຼັງຈາກການຍົກເລີກກົດໝາຍດັ່ງກ່າວ ແລະ ການບັງຄັບໃຊ້ກົດໝາຍການເລືອກຕັ້ງປີ 2026 ເຊິ່ງໄດ້ແກ້ໄຂກຳນົດເວລາຕາມກົດໝາຍທີ່ສຳຄັນ.

ການເລືອກຕັ້ງຂັ້ນຕົ້ນຂອງພັກການເມືອງ ລວມທັງການແກ້ໄຂຂໍ້ຂັດແຍ້ງທີ່ເກີດຂຶ້ນຈາກການເລືອກຕັ້ງຂັ້ນຕົ້ນ ຄາດວ່າຈະມີຂຶ້ນລະຫວ່າງວັນທີ 23 ເມສາ ຫາ 30 ພຶດສະພາ, ການຍື່ນແບບຟອມສະເໜີຊື່ຜູ້ສະໝັກຮັບເລືອກຕັ້ງລະດັບຊາດຜ່ານເວັບໄຊອອນລາຍຂອງ INEC ຈະເລີ່ມຕັ້ງແຕ່ວັນທີ 27 ມິຖຸນາ ຫາ 11 ກໍລະກົດປີນີ້.

ການໂຄສະນາຫາສຽງເລືອກຕັ້ງປະທານາທິບໍດີ ແລະ ສະພາແຫ່ງຊາດ ຈະເລີ່ມໃນວັນທີ 19 ສິງຫາ, ຂະນະທີ່ການໂຄສະນາຫາສຽງເລືອກຕັ້ງຜູ້ວ່າການລັດ ແລະ ສະພາຂອງລັດຕ່າງໆ ຈະເລີ່ມໃນວັນທີ 9 ກັນຍາ 2026.

# ສະພາແຫ່ງຊາດ Venezuela ແຕ່ງຕັ້ງໄອຍະການສູງສຸດ ແລະ ຜູ້ກວດກາລັດ



(Xinhua) - ວັນທີ 25 ກຸມພານີ້, ສະພາແຫ່ງຊາດເວເນຊູເອລາ ໄດ້ຍອມຮັບການລາອອກຂອງ ທາເຣັກ ວິລລຽມ ຊາບ (Tarek William Saab) ໄອຍະການສູງສຸດ ແລະອັລເຟຣໂດ ຣຸຍຊ໌ (Alfredo Ruiz) ຜູ້ກວດກາລັດ ແລະ ໄດ້ແຕ່ງຕັ້ງຜູ້ຮັກສາການແທນຢ່າງວ່ອງໄວ.

ໃນລະຫວ່າງກອງປະຊຸມສະໄໝສາມັນ, ສະມາຊິກສະພາແຫ່ງຊາດ ໄດ້ລົງຄະແນນສຽງແຕ່ງຕັ້ງ ແລຣ໌ຣີ ເດີໂວ (Larry Devoe) ເປັນຮັກສາການໄອຍະການສູງສຸດ, ເດີໂວ ເຊິ່ງທະນາຍຄວາມ, ປັດຈຸບັນດຳລົງຕຳແໜ່ງເປັນເລຂາທິການບໍລິຫານຂອງສະພາສິດທິມະນຸດແຫ່ງຊາດ; ສະພາແຫ່ງຊາດ ຍັງໄດ້ອະນຸມັດການແຕ່ງຕັ້ງ ຊາບ ເປັນຮັກສາການຜູ້ກວດກາລັດ.

ໃນລະຫວ່າງກອງປະຊຸມ, ປະທານສະພາແຫ່ງຊາດ ຮໍຣ໌ເກ ໂຣດຣິເກຊ(JorgeRodriguez) ໄດ້ອ່ານຈົດໝາຍລາອອກຂອງເຈົ້າໜ້າທີ່ທັງສອງ ພ້ອມທັງສະແດງຄວາມຂອບໃຈຕໍ່ຊາບແລະຣຸຍຊ໌ ສຳລັບການປະຕິບັດໜ້າທີ່ຂອງພວກເຂົາ "ໃນໄລຍະເວລາທີ່ຊັບຊ້ອນຢ່າງຍິ່ງແລະດ້ວຍການປະຕິບັດຕາມລັດຖະທຳມະນູນຢ່າງເຂັ້ມງວດ"; ໂຣດຣິເກຊ ກ່າວວ່າ ການແຕ່ງຕັ້ງເຫຼົ່ານີ້ ມີຈຸດປະສົງເພື່ອຮັບປະກັນວ່າສະຖາບັນຂອງລັດມີສ່ວນຮ່ວມຢ່າງຫ້າວຫັນໃນທຸກຂະບວນການ ແລະ "ທຳການແກ້ໄຂເມື່ອຈຳເປັນ".

# Denmark ຈະຈັດການເລືອກຕັ້ງລັດຖະສະພາໃນວັນທີ 24 ມີນາ

(Xinhua)-ນາຍົກລັດຖະມົນຕີ ເມດເຕ ເຟຣເດີຣິກເຊນ (Mette Frederiksen) ໄດ້ປະກາດເມື່ອວັນພະຫັດທີ 26 ກຸມພາວ່າ ດານມາກ ຈະຈັດການເລືອກຕັ້ງລັດຖະສະພາໃນວັນທີ 24 ມີນານີ້; ນາງກ່າວໃນລັດຖະສະພາວ່າ ຜູ້ມີສິດເລືອກຕັ້ງຈະຕັດສິນໃຈ "ທິດທາງທີ່ດານມາກຈະກ້າວໄປໃນອີກສີ່ປີຕໍ່ໜ້າ", ການເລືອກຕັ້ງຄັ້ງນີ້ຈະກຳນົດອົງປະກອບຂອງລັດຖະສະພາທີ່ມີ 179 ທີ່ນັ່ງ ເຊິ່ງລວມເຖິງທີ່ນັ່ງທີ່ເປັນຕົວແທນຂອງກຣີນແລນ (Greenland) ແລະ ໝູ່ເກາະຟາໂຣ (Faroe).

ພາຍໃຕ້ກົດລະບຽບຂອງດານມາກກ່ຽວກັບປ້າຍ (ໂປສເຕີ) ການເລືອກຕັ້ງ, ປ້າຍໂຄສະນາຫາສຽງ ສາມາດຕິດໄດ້ຕັ້ງແຕ່ຕອນທ່ຽງຂອງວັນເສົາທີສີ່ກ່ອນການເລືອກຕັ້ງ ເຊິ່ງໝາຍຄວາມວ່າພັກການເມືອງຕ່າງໆ ສາມາດເລີ່ມຕິດປ້າຍໄດ້ຕັ້ງແຕ່ຕອນທ່ຽງຂອງວັນເສົາທີ 28 ກຸມພານີ້ສຳລັບການເລືອກຕັ້ງ.

ດານມາກເປັນລະບອບລາຊາທິປະໄຕພາຍໃຕ້ລັດຖະທຳມະນູນທີ່ປົກຄອງໂດຍລະບົບລັດຖະສະພາ. ລັດຖະສະພາມີ 179 ທີ່ນັ່ງ, ລວມທັງສອງທີ່ນັ່ງສຳລັບກຣີນແລນ ແລະໝູ່ເກາະຟາໂຣ. ກຸ່ມການເມືອງຝ່າຍກາງຊ້າຍຂອງ ເຟຣເດີຣິກເຊນ ຊະນະການເລືອກຕັ້ງທົ່ວໄປຄັ້ງຫຼ້າສຸດໃນເດືອນພະຈິກ 2022.



# ບ່ໂລກໃຫ້ທັນ ກັບຂ່າວສັ້ນໆ

❖ ວິເສດ ສະແຫວງສຶກສາ

ບໍ່ສົນຄຳສະເໜີຂອງທ່ານ ທຣຳ-ຂ່າວຕ່າງປະເທດໃນຕົ້ນເດືອນກຸມພານີ້ໃຫ້ຮູ້ວ່າ: ທ່ານ ຄຣິສໂຕເຟີ ລັກຊອນ (Christopher Luxon) ນາຍົກລັດຖະມົນຕີ ນູແວນເຊລັງ (ນິວຊີແລນ) ຜູ້ປາກກ້າວ່າແຂງ ໄດ້ອອກມາປະຕິເສດຂໍ້ສະເໜີຂອງທ່ານ ໂດນັນ ທຣຳ ປະທານາທິບໍດີສະຫະລັດ ທີ່ຢາກໃຫ້ນູແວນເຊລັງ ເຂົ້າຮ່ວມຄະນະສັນຕິພາບ ທີ່ເອີ້ນເປັນພາສາອັງກິດວ່າ Board of Peace ດ້ວຍເຫດຜົນທີ່ອາດພາໃຫ້ທ່ານ ທຣຳ ຫງາຍເງິກ; ທ່ານນາຍົກນູແວນເຊລັງຕອບແບບສຸພາບແຕ່ເຈັບວ່າ "ລັດຖະບານພວກເຮົາໄດ້ພິຈາລະນາຄຳສະເໜີນີ້ແລ້ວ ແລະ ໄດ້ຕັດສິນໃຈບໍ່ເຂົ້າຮ່ວມ Board of Peace ໃນຮູບແບບທີ່ເປັນຢູ່ໃນປັດຈຸບັນ"; ສ່ວນທ່ານ ວິນສະຕັນ ປີເຕີສ (Winston Peters) ລັດຖະມົນຕີການຕ່າງປະເທດນູແວນເຊລັງ ກໍໄດ້ອອກມາສອຍຕື່ມວ່າ "ນູແວນເຊລັງ ເປັນໜຶ່ງໃນບັນດາປະເທດທີ່ໃຫ້ກຳເນີດ ແລະ ສະໜັບສະໜູນອົງການສະຫະປະຊາຊາດ (ສປຊ), ພວກເຮົາຄິດວ່າສິ່ງສຳຄັນກໍຄື Board of Peace ນີ້ ຕ້ອງເປັນພຽງໜ່ວຍງານຕື່ມເຕັມທີ່ຕ້ອງເຄື່ອນໄຫວຕາມກົດບັດຂອງອົງການ ສປຊ". ກ່ອນໜ້ານັ້ນ (ຂ່າວຕ່າງປະເທດໃນທ້າຍເດືອນມັງກອນປີນີ້) ກໍໄດ້ໃຫ້ຮູ້ວ່າ: ເຢຍລະມັນ ກໍໄດ້ປະຕິເສດເຂົ້າຮ່ວມຄະນະສັນຕິພາບຕາມການສະເໜີຂອງທ່ານປະທານາທິບໍດີ ທຣຳ ໂດຍໄດ້ບອກວ່າ ເຢຍລະມັນ ມີພັນທະເຮັດໃຫ້ລະບຽບຂອງໂລກເຂັ້ມແຂງໜັກແໜ້ນ ໂດຍຍຶດຖືອົງການ ສປຊ ເປັນໃຈກາງ, ເຢຍລະມັນ ເຫັນວ່າ ຂໍ້ສະເໜີສ້າງຕັ້ງ Board of Peace ຂອງປະທານາທິບໍດີ ທຣຳ ນັ້ນ ຂັດກັບອົງການສະຫະປະຊາຊາດ.

ລັດຖະສະພາເອີຣົບ ງົດການເຈລະຈາການຄ້າກັບສະຫະລັດ - ຂ່າວໃນທ້າຍເດືອນມັງກອນປີນີ້ ໃຫ້ຮູ້ວ່າ: ລັດຖະສະພາເອີຣົບ (European Parliament) ໄດ້ປະກາດງົດການເຈລະຈາການຄ້າລະຫວ່າງສະຫະພາບເອີຣົບ (EU) ກັບສະຫະລັດ ໄວ້ກ່ອນ ຍ້ອນສະຫະລັດຂົ່ມຂູ່ກ່ຽວກັບການປັບຂຶ້ນພາສີສຳລັບບັນດາປະເທດໃນເອີຣົບ ທີ່ຕ້ານແຜນຍຶດກຣີນແລນຂອງສະຫະລັດອາເມລິກາ; ທ່ານ ເບີນລັງເກ (Bernd Lange) ປະທານກຳມາທິການການຄ້າສາກົນຂອງສະພາ EU ບອກວ່າ "ຕໍ່ການຂົ່ມຂູ່ດັ່ງກ່າວພວກເຮົາບໍ່ມີທາງເລືອກອື່ນນອກຈາກຈະຕ້ອງໄດ້ງົດທຸກການເຈລະຈາການຄ້າລະຫວ່າງ EU-US ໄວ້ກ່ອນ".

ຂໍ້ສະເໜີຍົກຍ້າຍອົງການສະຫະປະຊາຊາດເພື່ອການພັດທະນາ ໄປຢູ່ເອີຣົບ-ຂ່າວຕ່າງປະເທດປະຈຳວັນທີ21 ມັງກອນປີນີ້ໃຫ້ຮູ້ວ່າ: ອົງການສະຫະປະຊາຊາດເພື່ອການພັດທະນາ ຫຼືຢູເອັນດີພີ(UNDP)ມີແຜນຍົກຍ້າຍຫຼາຍໆໜ່ວຍງານໄປຕັ້ງຢູ່ໃນເອີຣົບ (ຈາກນິວຢອກ, ສະຫະລັດອາເມລິກາ) ໂດຍໃຫ້ເຫດຜົນວ່າເພື່ອໃຫ້ແທດເໝາະກັບຂອບງົບປະມານແລະການພັດທະນາ ແນໃສ່ເຮັດພັນທະພາບເຂັ້ມແຂງ, ເຮັດໃຫ້ການຊ່ວຍເຫຼືອກຸ່ມຄົນທີ່ມີຄວາມສ່ຽງທີ່ສຸດ ເຕີບໃຫຍ່ຂະຫຍາຍຕົວ; ເປົ້າໝາຍທີ່ຕັ້ງໃໝ່ຂອງ UNDP ແມ່ນນະຄອນບອນ (ນະຄອນຫຼວງເກົ່າຂອງເຢຍລະມັນຕາເວັນຕົກເມື່ອກ່ອນ)ແລະນະຄອນຫຼວງມາດຣິດ, ແອັດສະປາຍ (ສະເປນ). ສຳລັບຢູ່ນະຄອນບອນ, ເຢຍລະມັນນັ້ນຈະຮອງຮັບພະນັກງານUNDP ໄດ້ຫຼາຍກວ່າ400 ຕຳແໜ່ງງານ, ແຕ່ໃດໆມານະຄອນບອນ ແມ່ນສູນກາງເຕົ້າໂຮມ ແລະ ເຄື່ອນໄຫວຂອງໜ່ວຍງານອາສາສະໝັກຂອງ ສປຊເຊິ່ງນອນຢູ່ໃນການຄຸ້ມຄອງຂອງUNDP ນັ້ນເອງ.




#ບ່າວກະບື

ຍິງຕຸ້ຍນ້ຳໜັກເກີນ ຕັດສິນໃຈຕິດຮູບສາວຫຸ່ນແໜ້ນໄດ້ລັດສ່ວນໃສ່ດ້ານໃນຝາຕູ້ເຢັນ, ຮູບແຜ່ນນັ້ນ ຊ່ວຍຢຸດບໍ່ໃຫ້ນາງຄົ້ນຕູ້ເຢັນຊອກອາຫານມາກິນກ່ອນຄາບເຂົ້າແທ້ໆ. ຮູບເຕືອນສະຕິແຜ່ນນີ້ ໃຫ້ຜົນຢ່າງໜ້າອັດສະຈັນ. ພຽງແຕ່ 1 ເດືອນເທົ່ານັ້ນ, ນາງກໍສາມາດຫຼຸດນ້ຳໜັກໄດ້ 5 ກິໂລ; ແຕ່ບັນຫາໂຊກຮ້າຍ, ໃນໄລຍະດຽວກັນນັ້ນ ຝ່າຍຜູ້ເປັນຜົວພັດໄຂເບິ່ງຕູ້ເຢັນເປັນປະຈຳ ຈົນເຮັດໃຫ້ນ້ຳໜັກລາວເພີ່ມຂຶ້ນ 10 ກິໂລ.

#BAOKBU

An overweight woman decided to glue a picture of a shapely young woman to the inside of the fridge door. The picture helped stop her from raiding the fridge between meals. The reminder worked like a magic. In one month, she lost 5 kgs. Unfortunately, during the same period, her husband peered inside the refrigerator so often that he gained 10 kgs.

ທະນາຄານພັດທະນາລາວ
LDB Bank

## ຜົນການເລືອກຕັ້ງ...

(ຕໍ່ຈາກໜ້າ 6)

ເມືອງ, ຫົວໜ້າຫ້ອງການກະສິກຳ ແລະ ສິ່ງແວດລ້ອມແຂວງ;

3. ທ່ານ ລຳໄພ ພົນປະດິດ ຮອງເລຂາໜ່ວຍພັກ, ຫົວໜ້າຂະແໜງ ພະແນກການເງິນແຂວງ;

4. ທ່ານ ບຸນທົງ ໄຊຍະສານຮອງເລຂາໜ່ວຍພັກ, ຮອງຫົວໜ້າຫ້ອງວ່າການສະພາປະຊາຊົນແຂວງ;

5. ທ່ານ ນາງ ຄອນສະຫວັນ ຍາຍມີວົງ ຮອງເລຂາໜ່ວຍພັກ, ຮອງຫົວໜ້າຄະນະຈັດຕັ້ງເມືອງ.

**- ເຂດເລືອກຕັ້ງເມືອງປາກກະດິງ:** ມີຜູ້ລົງສະໝັກຮັບເລືອກຕັ້ງ 7 ທ່ານ, ຍິງ 2 ທ່ານ; ໄດ້ຮັບເລືອກ 5 ທ່ານ, ຍິງ 1 ທ່ານ ດັ່ງນີ້:

1. ທ່ານ ບຸນຄົບ ຈັນທະວົງ ກຳມະການປະຈຳພັກແຂວງ, ເລຂາພັກຄະນະບໍລິຫານງານພັກເມືອງ;

2. ທ່ານ ນາງ ຟອງສະໝຸດ ພົງວິຈິດ ກຳມະການພັກແຂວງ, ຫົວໜ້າຫ້ອງວ່າການສະພາປະຊາຊົນແຂວງ;

3. ທ່ານ ຖາວອນ ປະທຸມມະວັນ ກຳມະການພັກເມືອງ, ຮອງຫົວໜ້າຄະນະຈັດຕັ້ງເມືອງ;

4. ທ່ານ ດຣ. ລັດຕະນະ ພຣະສະຫວັດ ຮອງເລຂາຄະນະບໍລິຫານງານຊາວໜຸ່ມແຂວງ;

5. ທ່ານ ພັທ. ສົມລິດ ບານທະວົງ ຄະນະກອງບັນຊາການ, ຮອງຫົວໜ້າຫ້ອງການບໍລິຫານ ທະຫານແຂວງ.

**- ເຂດເລືອກຕັ້ງເມືອງຄຳເກີດ:** ມີຜູ້ລົງສະໝັກຮັບເລືອກຕັ້ງ ມີທັງໝົດ 7 ທ່ານ, ຍິງ 2 ທ່ານ, ໄດ້ຮັບເລືອກ 5 ທ່ານ, ຍິງ 1 ທ່ານ ດັ່ງນີ້:

1. ທ່ານ ກີ່ ຊົງລ່າຫວ່າງ ກຳມະການປະຈຳພັກແຂວງ, ເລຂາພັກຄະນະບໍລິຫານງານພັກເມືອງ;

2. ທ່ານ ນາງ ພົດສະໄໝ ແກ້ວວິເສດ ຮອງເລຂາໜ່ວຍພັກ, ຮອງປະທານຄະນະກຳມະການວັດທະນະທຳ-ສັງຄົມ ແລະບັນດາເຜົ່າສະພາປະຊາຊົນແຂວງ;

3. ທ່ານ ກິ່ງ ວັນນະລາ ກຳມະການພັກເມືອງ, ຮອງປະທານອົງການກວດກາລັດເມືອງ;

4. ທ່ານ ແກ້ວອຸດອນ ເມືອງວົງ ຜູ້ກວດກາໜ່ວຍພັກ, ຄະນະບໍລິຫານງານຊາວໜຸ່ມແຂວງ, ຫົວໜ້າຂະແໜງ ຄະນະກຳມະການຍຸຕິທຳ ແລະ ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ;

5. ທ່ານ ປອ. ລິນທອງ ອິນທິລາດ ຮອງຫົວໜ້າຂະແໜງ ຂະແໜງພັດທະນາຄູ ພະແນກສຶກສາທິການແລະກິລາແຂວງ.

**- ເຂດເລືອກຕັ້ງເມືອງວຽງທອງ:** ມີຜູ້ລົງສະໝັກຮັບເລືອກຕັ້ງ 7 ທ່ານ, ຍິງ 2 ທ່ານ, ໄດ້ຮັບເລືອກ 5 ທ່ານ, ຍິງ 1 ທ່ານ ດັ່ງນີ້:

1. ທ່ານ ອາລຸນສັກ ປະທຳມະວົງ ກຳມະການປະຈຳພັກແຂວງ, ເລຂາພັກຄະນະບໍລິຫານງານພັກເມືອງ;

2. ທ່ານເຄນພອນ ໄຊຍະຈັກ ກຳມະການພັກເມືອງ, ເລຂາຄະນະບໍລິຫານຊາວໜຸ່ມເມືອງ;

3. ທ່ານ ຄອນສະຫວັນ ສຸກຂະເສີມ ກຳມະການພັກແຂວງ, ຫົວໜ້າພະແນກອຸດສາຫະກຳ ແລະ ການຄ້າແຂວງ;

4. ທ່ານ ນາງ ແສງເງິນ ຊາມຸນຕີ ຮອງຫົວໜ້າຫ້ອງວ່າການສະພາປະຊາຊົນແຂວງ;

5. ທ່ານ ພັທ. ຈີ່ຟື ເຈີ່ຍີຊົ່ງ ຄະນະພັກຮາກຖານ, ຮອງຫົວໜ້າກອງບັນຊາການທະຫານເມືອງ.

**- ເຂດເລືອກຕັ້ງເມືອງໄຊຈຳພອນ:** ມີຜູ້ລົງສະໝັກຮັບເລືອກຕັ້ງ ມີທັງໝົດ 7 ທ່ານ, ຍິງ 3 ທ່ານ, ໄດ້ຮັບເລືອກ 5 ທ່ານ, ຍິງ 1 ທ່ານ ດັ່ງນີ້:

1. ທ່ານ ໄກສອນ ຈັນສີນາ ກຳມະການປະຈຳພັກແຂວງ, ເລຂາພັກຄະນະບໍລິຫານງານພັກເມືອງ

2. ທ່ານ ຄຳປຸ່ນ ສີຫາລາດ ກຳມະການພັກແຂວງ, ປະຈຳຢູ່ສະພາປະຊາຊົນແຂວງ;

3. ທ່ານ ນາງ ສີລາວັນ ແສງໄມພອນ ກຳມະການພັກເມືອງ, ປະທານສະຫະພັນແມ່ຍິງເມືອງ.

4. ທ່ານ ວອນວິໄລ ສົມບັດມູນວົງ ເລຂາໜ່ວຍພັກ, ຫົວໜ້າຂະແໜງຊັບພະຍາກອນນ້ຳ, ອຸຕຸນິຍົມ ແລະ ອຸທົກກະສາດ;

5. ທ່ານ ສົມໃຈ ຫວ່າງ ຮອງເລຂາໜ່ວຍພັກ, ຮອງຫົວໜ້າຫ້ອງຍຸຕິທຳເມືອງ.

**ຜູ້ຊີ້ນຳ**
ທ່ານ ສິງຄຳ ວົງພະຈັນ

**ຄະນະຊ່ຽວຊານທີ່ປຶກສາ**
ທ່ານ ສີສຸພັນ ແສງສະຫວັນ
ທ່ານ ວິເສດ ສະແຫວງສຶກສາ
ທ່ານ ທອງດາ ສຸພາສິດ
ທ່ານ ປອ. ພົດສະໄໝ ບຸນວິໄລ

**ຄະນະບັນນາທິການ**
ທ່ານ ສຸລະສັກ ສຸວັນນະວົງ ຫົວໜ້າ ບກ
ທ່ານ ວິລະພັດ ພາບວິໄຊ ຮອງຫົວໜ້າ ບກ
ທ່ານ ບຸນເກີດ ວົງໄຊຍາ ຮອງຫົວໜ້າ ບກ
ທ່ານ ແກ້ວລະກາ ຊ້ອຍໄຊຍະ ຮອງຫົວໜ້າ ບກ

**ກອງບັນນາທິການ**
ທ່ານ ນາງ ວັນນາລິນ ສຸລິວົງສັກ
ທ່ານ ນາງ ໄຊໂສພາພອນ ມິ່ງມຽຄູນ
ທ່ານ ນາງ ສຸພາວັນ ທອມສະນິດ
ທ່ານ ນາງ ອາລິນ ສຸພົມມະປະດິດ

**ອອກແບບ - ຈັດໜ້າ**
ທ່ານ ນາງ ກຸກກິກ ບຸດດາໄຊ

**ຮູບພາບປະກອບ**
ທ່ານ ສອນສັກ ວັນວິໄຊ